# ເອກະສານ
# 4 ບຸກທະລຸຂອງຂະແໜງການສຶກສາ ແລະ ກິລາ
# -------000------

ແນວທາງນະໂຍບາຍຂອງພັກ ເປັນທິດທາງລວມໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ. ກອງປະຊຸມໃຫຍ່ຂອງພັກແຕ່ລະຄັ້ງລ້ວນແຕ່ມີການຮັບຮອງເອົານະໂຍບາຍໃໝ່ ຊຶ່ງສະແດງໃຫ້ເຫັນວິໄສທັດໃໝ່ໃນການພັດທະນາຕາມຍຸກສະໄໝໃໝ່ທີ່ໄດ້ຄົ້ນຄວ້າວິໄຈ ແລະ ຕີລາຄາຂອງພັກ.
ສຳລັບກອງປະຊຸມໃຫຍ່ຂອງພັກຄັ້ງທີ IX ນີ້ ໄດ້ມີນະໂຍບາຍທີ່ພົ້ນເດັ່ນອັນໜຶ່ງທີ່ພັກໄດ້ຮັບຮອງເອົາ ຢູ່ໃນແຜນພັດທະນາເສດຖະກິດ - ສັງຄົມ 5 ປີ (2011-2015)ນັ້ນຄື "ບຸກທະລຸ 4 ປະການ" ຫຼື ເວົ້າແບບຫຍໍ້ໆວ່າ " 4 ບຸກທະລຸ". ເພື່ອຜັນຂະຫຍາຍນະໂຍບາຍດັ່ງກ່າວເຂົ້າໃນຂະແໜງການສຶກສາ ແລະ ກິລາ; ກະຊວງສຶກສາທິການ ແລະກິລາຈິ່ງໄດ້ຫັນເອົາເນື້ອໃນຈິດໃຈຂອງ"4ບຸກທະລຸ" ເຂົ້າໃສ່ວຽກງານຕົວຈິງຂອງຂະແໜງການສຶກສາ ແລະ ກິລາດັ່ງນີ້:

## I. ສະພາບ ແລະ ຈຸດພິເສດຂອງຍຸກສະໄໝ.

ນັບແຕ່ປີ2001ເປັນຕົ້ນມາ; ມວນມະນຸດໃນທົ່ວໂລກໄດ້ກ້າວເຂົ້າສູ່ສັດຕະວັດທີ 21 ຢ່າງເຕັມຕົວ ແລະ ເປັນຍຸກທີ່ການປະຕິວັດວິທະຍາສາດເຕັກນິກກ້າວກະໂດດກາຍມາເປັນຍຸກຂໍ້ມູນຂ່າວສານທີ່ບໍ່ມີພົມແດນ ເອີ້ນວ່າ"ຍຸກໂລກາພິວັດ" ຊຶ່ງມີຄວາມສຳຄັນຍິ່ງຕໍ່ການປ່ຽນແປງວິທີການດຳລົງຊີວິດຢູ່ໃນສັງຄົມຂອງມວນມະນຸດ. ການປ່ຽນແປງວິທີການດຳລົງຊີວິດຂອງມວນມະນຸດນີ້ໄດ້ມີອິດທິພົນຍິ່ງຕໍ່ລະບົບການສຶກສາ ເພື່ອພັດທະນາຊັບພະຍາກອນມະນຸດໃຫ້ປັບຕົວເຂົ້າໃນແບບແຜນດຳລົງຊີວິດໃນຍຸກໃໝ່ຢ່າງກົມກຽວ. ອີກດ້ານໜຶ່ງສະພາບການທາງສາກົນທີ່ເຄີຍມີການແຂ່ງຂັນ ແລະ ມີຂໍ້ຂັດແຍ່ງຢ່າງຮຸນແຮງກໍ່ໄດ້ກັບ

ກາຍມາເປັນທ່າອ່ຽງແຫ່ງການຮ່ວມມື ແລະ ເຊື່ອມໂຍງ ຊຶ່ງສ້າງໂອກາດທີ່ດີໃນການພັດທະນາແຕ່ລະປະເທດ. ການພັດທະນາເສດຖະກິດ - ສັງຄົມໃນແຕ່ລະປະເທດໃນໂລກທີ່ໃນໄລຍະຜ່ານມາເຄີຍອີງໃສ່ຊັບພະຍາກອນທຳມະຊາດ ເປັນຕົ້ນຕໍນັ້ນ ມາຮອດປະຈຸບັນນີ້ໄດ້ຫຼຸດຜ່ອນລົງຫລາຍ ແລະ ນັບມື້ນັບຈະຫຼຸດຜ່ອນລົງໃນອະນາຄົດ; ແຕ່ຈະອີງໃສ່ມັນສະໝອງຂອງມະນຸດແທນຊັບພະຍາກອນທຳມະຊາດເປັນສຳຄັນ. ສະພາບຈຸດພິເສດ ແລະ ທ່າອ່ຽງຂອງໂລກທີ່ກ່າວມານີ້ ໄດ້ຊີ້ບອກໃຫ້ຜູ້ນຳຂອງແຕ່ລະປະເທດ ຕ້ອງມີວິໄສທັດໃໝ່ ແລະ ຈິຕະນາການທີ່ຖືກຕ້ອງເພື່ອກຳນົດແນວທາງນະໂຍບາຍການພັດທະນາປະເທດ ໂດຍສະເພາະການພັດທະນາມັນສະໝອງຂອງພົນລະເມືອງໃນຊາດຕົນ ເພື່ອກຽມພ້ອມປະຕິບັດໜ້າທີ່ໃຫ້ສອດຄ່ອງກັບການປ່ຽນແປງໃໝ່ຂອງຍຸກສະໄໝ.

ສຳລັບປະເທດເຮົາໃນທ່າມກາງສະພາບແວດລ້ອມຂອງໂລກທີ່ມີການປ່ຽນແປງພາຍໃຕ້ກະແສໂລກາພິວັດ, ເປັນການຮ່ວມມື ແລະ ເຊື່ອມໂຍງສາກົນນີ້; ພັກເຮົາຍິ່ງຮັບຮູ້ແຈ້ງວ່າ ພາລະກຳ ປະຫວັດສາດ ແລະ ຄວາມຮັບຜິດຊອບອັນໜັກໜ່ວງຂອງຕົນ. ຄວາມຮັບຜິດຊອບ ລວມຂອງພັກໃນຍຸກນີ້ແມ່ນເຊີດຊູຄວາມສາມາດໃນການນຳພາໃຫ້ສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝນັ້ນ; ແກ້ໄຂຄວາມທຸກຍາກໃຫ້ໄດ້ໂດຍພື້ນຖານ ແລະ ເຮັດໃຫ້ປະຊາຊົນບັນດາເຜົ່າມີຄວາມຢູ່ດີກິນດີເຮັດໃຫ້ປະເທດເຮົາຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາໃນ ປີ 2020 ພ້ອມທັງມີພື້ນຖານວັດຖຸອັນຈຳເປັນສຳລັບການກ້າວຂຶ້ນ ເພື່ອໄປຕາມເສັ້ນທາງສູ່ຈຸດໝາຍສັງຄົມນິຍົມທີ່ວາງໄວ້ຢ່າງໜັກແໜ້ນ. ພັກເຮົາໄດ້ວາງຄາດໝາຍສູ້ຊົນ ແລະ ທິດທາງໜ້າທີ່ຈຸດສຸມໃນດ້ານຕ່າງໆອອກຢ່າງເປັນລະບົບເຊິ່ງສະທ້ອນເຖິງມານະຈິດ ແລະ ຄວາມມຸ່ງມາດປາຖະໜາອັນແຮງກ້າຂອງທົ່ວພັກ ແລະ ທົ່ວປວງຊົນລາວທຸກເຜົ່າ, ທຸກຊັ້ນຄົນທີ່ຮັກເຊື້ອແພງຊາດທັງພາຍໃນ ແລະ ຕ່າງປະເທດຈົ່ງພ້ອມກັນເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນແໜ້ນໜາອ້ອມຂ້າງພັກ, ເຊີດຊູມານະຈິດ ແລະ ມູນເຊື້ອດຸໝັ່ນປະດິດສ້າງໃຫ້ສູງຂຶ້ນ, ຈັດຕັ້ງປະຕິບັດ

ສອງໜ້າທີ່ຍຸດທະສາດ ຕາມແນວທາງປ່ຽນແປງໃໝ່ໃຫ້ມີຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ, ສ້າງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວໃຫ້ເປັນປະເທດອຸດສາຫະກຳທີ່ມັ່ງຄັ່ງເຂັ້ມແຂງ,ປະຊາຊົນຮັ່ງມີຜາສຸກ, ສັງຄົມມີຄວາມສາມັກຄີປອງດອງ, ມີປະຊາທິປະໄຕຍຸຕິທຳ ແລະ ສີວິໄລ.

ສຳລັບທາງດ້ານການສຶກສາ ແລະ ກິລາ ຊຶ່ງເປັນຂົງເຂດທີ່ຮັບຜິດຊອບການພັດທະນາຊັບພະຍາກອນມະນຸດ ແລະ ເປັນຂອດໃຈກາງຂອງການປະຕິບັດພາລະກຳທີ່ເປັນປະຫວັດສາດນີ້; ພັກເຮົາໄດ້ວາງຄາດໝາຍສູ້ຊົນຊຶ່ງມີເນື້ອໃນຈິດໃຈສຳຄັນດັ່ງຕໍ່ໄປນີ້:

- ຮອດປີ 2015 ຕ້ອງປະຕິບັດການສຶກສາຊັ້ນປະຖົມພາກບັງຄັບໃຫ້ເປັນຈິງ ແລະ ໃຫ້ພົນລະເມືອງລາວສ່ວນໃຫຍ່ມີລະດັບການສຶກສາຊັ້ນມັດທະຍົມຕອນຕົ້ນ. ບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ. ພົນລະເມືອງລາວທຸກຄົນຕ້ອງຈົບຊັ້ນປະຖົມສຶກສາ ແລະ ສະເໝີພາບຍິງ-ຊາຍໃນການເຂົ້າເຖິງການສຶກສາ.
- ສືບຕໍ່ປະຕິຮູບລະບົບການສຶກສາແຫ່ງຊາດ ໂດຍໃຫ້ຄວາມສຳຄັນແກ່ການຍົກຄຸນນະພາບໄປຄຽງຄູ່ກັບການຂະຫຍາຍໂອກາດດ້ານການສຶກສາໃຫ້ກ້ວາງຂວາງ ແລະ ທົ່ວເຖິງ. ຮັບປະກັນໃຫ້ການ ສຶກສາດຳເນີນໄປຢ່າງກົມກຽວຕາມ 3 ລັກສະນະ(ລັກສະນະຊາດ, ວິທະຍາສາດ-ທັນສະໄໝ ລັກສະນະມະຫາຊົນ ແລະ 5 ຫຼັກມູນຂອງການສຶກສາ (ຄຸນສົມບັດສຶກສາ, ປັນຍາສຶກສາ, ສິລະປະ ສຶກສາ, ພະລະສຶກສາ ແລະ ແຮງງານສຶກສາ).
- ຖືເອົາການພັດທະນາລະບົບການສຶກສາແຫ່ງຊາດກໍຄືການກໍ່ສ້າງຄົນເປັນໃຈກາງ ແລະ ເປັນໜ້າທີ່ຈຸດສຸມຂອງການພັດທະນາຂົງເຂດສັງຄົມ - ວັດທະນະທຳແນໃສ່ບັນລຸເປົ້າໝາຍເຮັດໃຫ້ຄົນລາວເປັນພົນລະເມືອງດີ, ມີແນວຄິດ-ຄຸນສົມບັດສິນທຳປະຕິວັດ, ມີນ້ຳໃຈຮັກເຊື້ອແພງຊາດ, ມີຄວາມຈົງຮັກພັກດີຕໍ່ຊາດ, ມີຄວາມສາມັກຄີເອື້ອເຟື້ອເພື່ອແຜ່, ມີເງື່ອນໄຂໄດ້ຮຽນຮູ້ ແລະ ພັດທະນາຕົນເອງຢ່າງຮອບດ້ານ ແລະ ຕໍ່ເນື່ອງ, ມີວິຊາຄວາມຮູ້, ມີຊີວະທັດ - ໂລກະທັດທີ່

ກ້າວໜ້າ, ຮູ້ອະນຸລັກຮັກສາ, ສືບທອດ ແລະ ເສີມຂະຫຍາຍວັດທະນະທຳອັນດີງາມຂອງຊາດ, ທັງຮັບຮູ້ເອົາສິ່ງທີ່ມີຄຸນຄ່າທາງດ້ານວັດທະນະທຳຈາກນາໆຊາດ ແລະ ສາກົນ ແລ້ວມາພັດທະນາຄົນລາວໃຫ້ມີຄວາມສີວິໄລທາງດ້ານຈິດໃຈ, ມີຄວາມເຂັ້ມແຂງທາງຮ່າງກາຍ ແລະ ມີພະລະນາໄມສົມບູນ.

• ຈຸດສຸມຂອງການພັດທະນາການສຶກສາ ແມ່ນການສ້າງບຸກຄະລາກອນປະເພດຕ່າງໆເຊັ່ນ: ກຳມະກອນອາຊີບ, ນາຍຊ່າງ, ນັກວິຊາການ, ວິສະວະກອນຜູ້ຄຸ້ມຄອງບໍລິຫານ, ຜູ້ປະກອບການ, ຜູ້ຈັດການ... ໃຫ້ມີຄວາມຮູ້ - ຄວາມສາມາດທັງມີຄຸນນະພາບ ແລະ ມີຈຳນວນພຽງພໍສຳລັບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນຂົງເຂດພັກ,ລັດ ແລະ ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງຕະຫຼາດແຮງງານໃນທົ່ວສັງຄົມ.

• ສົ່ງເສີມຂະຫຍາຍການສຶກສາໃຫ້ກ້ວາງຂວາງ,ແຂງແຮງ ແລະ ມີຈຸດສຸມໂດຍເລັ່ງໃສ່ເຂດຊົນນະບົດ,ເຂດຊົນເຜົ່າຫ່າງໄກສອກຫຼີກ.ຖືເອົາການລົບລ້າງຄວາມບໍ່ຮູ້ໜັງສືຕິດພັນກັບການຈັດຕັ້ງການຮຽນ ແລະ ການຝຶກອົບຮົບວິຊາຊີບຂັ້ນພື້ນຖານຕາມຄວາມຕ້ອງການຂອງແຕ່ລະທ້ອງຖິ່ນ ເພື່ອແກ້ໄຂຄວາມທຸກຍາກ ແລະ ບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ.

ເມື່ອພິຈາລະນາຈາກແນວທາງນະໂຍບາຍຂອງພັກຕໍ່ການພັດທະນາການສຶກສານີ້ຈະສັງເກດໄດ້ວ່າເປັນແນວທາງທີ່ຄົບຖ້ວນ ແລະ ສົມບູນແບບທີ່ສຸດໃນໄລຍະນີ້; ດ້ານໜຶ່ງແມ່ນຈຸດໝາຍສູ້ຊົນທີ່ເປັນເອກະລັກທີ່ມີລັກສະນະສະເພາະຂອງພັກເຮົາເອງ ແລະ ອີກດ້ານໜຶ່ງແມ່ນ ພັດທະນາການສຶກສາລາວໃຫ້ມີຄວາມເຊື່ອມໂຍງກັບສາກົນ ແລະ ພາກພື້ນຢ່າງຊັດເຈນ ຊຶ່ງສະ ແດງເຖິງວິໄສທັດຂອງພັກເຮົາ ຊຶ່ງຍາມໃດກໍ່ຄຳນຶງເຖິງຄວາມເປັນຊາດຂອງຕົວເອງ ແລະຄວາມເປັນສ່ວນໜຶ່ງຂອງວົງຄະນາຍາດສາກົນ.

## II. ຜົນສຳເລັດ ແລະ ບັນຫາຂອງການສຶກສາ.

### 2.1.ຜົນສຳເລັດທາງການພັດທະນາການສຶກສາ.

ຜ່ານການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດຖະບານໃນດ້ານການພັດທະນາຊັບພະຍາກອນມະນຸດ ໂດຍສະເພາະແມ່ນດ້ານການສຶກສາ ແລະ ກິລາ ທີ່ກ່າວມາຂ້າງເທິງນີ້; ພວກເຮົາໄດ້ບັນລຸໝາກຜົນຫລາຍປະການເປັນຕົ້ນແມ່ນການຂະຫຍາຍຕາໜ່າງການສຶກສາໄດ້ຢ່າງກວ້າງຂວາງ. ມາຮອດສົກຮຽນ2011-2012ນີ້; ອັດຕາເຂົ້າຮຽນລວມໃນຊັ້ນອະນຸບານສຶກສາບັນລຸ28.5%.ອັດຕາເຂົ້າຮຽນສຸດທິໃນຊັ້ນປະຖົມສຶກສາສາມາດບັນລຸ95.2%(ໃນນັ້ນອັດຕາເຂົ້າຮຽນສຸດທິໃນຊັ້ນປະຖົມສຶກສາຂອງເພດຍິງສາມາດບັນລຸ 94.3%, ເພດຊາຍບັນລຸ96%).ອັດຕາເຂົ້າຮຽນລວມໃນຊັ້ນມັດທະຍົມຕອນຕົ້ນບັນລຸໄດ້ 64.7% (ໃນນັ້ນອັດຕາເຂົ້າຮຽນລວມຂອງເພດຍິງສາມາດບັນລຸໄດ້ 61%, ເພດຊາຍສາມາດບັນລຸໄດ້ 68.2%). ອັດຕາເຂົ້າຮຽນລວມໃນຊັ້ນມັດທະຍົມຕອນປາຍບັນລຸໄດ້34.7% (ໃນນັ້ນອັດຕາເຂົ້າຮຽນລວມຂອງເພດຍິງສາມາດບັນລຸໄດ້ 31.4%, ເພດຊາຍສາມາດບັນລຸໄດ້ 38.2%). ດ້ານການສຶກສານອກໂຮງຮຽນ; ພວກເຮົາກໍ່ສາມາດປະກາດຈົບຊັ້ນປະຖົມບຳລຸງໃຫ້ແກ່ປະຊາຊົນໄດ້ 110 ເມືອງ. ໃນສົກຮຽນດຽວກັນ ກໍ່ມີນັກຮຽນ-ນັກສຶກສາທີ່ກຳລັງຮຽນຢູ່ສະຖາບັນການສຶກສາວິຊາຊີບ-ເຕັກນິກຈຳນວນ 11,937 ຄົນ (ໃນນັ້ນມີເພດຍິງ 4,431 ຄົນ ແລະ ເພດຊາຍ 7,506 ຄົນ); ມີນັກສຶກສາທີ່ກຳລັງຮຽນຢູ່ສະຖາບັນການສຶກສາຊັ້ນສູງ ແລະ ມະຫາວິທະຍາໄລທັງໝົດ 102,045 ຄົນ (ໃນນັ້ນມີເພດຍິງຈຳນວນ 44,035 ຄົນ ແລະ ເພດຊາຍ 58,010 ຄົນ). ການສຶກສາຊັ້ນສູງ ແລະ ມະຫາວິທະຍາໄລນີ້ ໄດ້ຮັບການສົ່ງເສີມ ແລະ ເປີດກວ້າງໃຫ້ມີຫລາກຫລາຍສາຂາວິຊາຮຽນ ຊຶ່ງມີທັງສາຂາວິຊາທີ່ເປັນວິທະຍາສາດ, ສັງຄົມສາດ, ວິສະວະກຳ, ເຕັກໂນໂລຊີການສື່ສານສະໄໝໃໝ່, ເສດຖະກິດ ແລະ ການບໍລິຫານຄຸ້ມຄອງ. ທັງໝົດນີ້ ແມ່ນການກໍ່ສ້າງຊັບພະຍາກອນມະນຸດເພື່ອຮອງຮັບການປ່ຽນແປງຕາມກະແສໂລກາພິວັດຢູ່ໃນປະເທດເຮົາ.

ຄຽງຄູ່ກັບການພັດທະນາການສຶກສາລາວໃຫ້ທັນກັບກະແສໂລກາພິວັດແລ້ວ ຂະແໜງການສຶກສາ ແລະ ກິລາຂອງພວກເຮົາກໍ່ຍັງໄດ້ເອົາໃຈໃສ່ພັດທະນາການສຶກສາລາວຕາມ 3 ທັດສະນະຂອງພັກ, ກໍ່ສ້າງເຍົາວະຊົນ ແລະ ຊາວໜຸ່ມລາວໃຫ້ເປັນຄົນດີຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ ແລະ ຕາມ 5 ຫລັກມູນຂອງການສຶກສາກຳນົດໄວ້.

## 2.2. ບັນຫາຂອງການສຶກສາ.

ເຖິງວ່າພວກເຮົາ ໄດ້ມີຄວາມພະຍາຍາມພັດທະນາລະບົບການສຶກສາຂອງລາວເຮົາ ຕາມແນວທາງນະໂຍບາຍຂອງພັກ ແລະ ການປ່ຽນແປງຕາມກະແສໂລກາພິວັດ ຈົນປະສົບຄວາມສຳເລັດຫລາຍສິ່ງຫລາຍປະການມາແລ້ວກໍ່ຕາມ; ແຕ່ພວກເຮົາກໍ່ຍັງປະສົບກັບບັນຫາສະເພາະຈຳນວນໜຶ່ງທີ່ເປັນສິ່ງຂັດຂວາງ, ກີດໜ່ວງການພັດທະນາປະເທດຊາດ ແລະ ພັດທະນາຊັບພະຍາກອນມະນຸດຕາມແນວທາງນະໂຍບາຍຂອງພັກ ແລະ ຕາມກະແສໂລກາພິວັດ ຊຶ່ງລາຍລະອຽດມີດັ່ງນີ້:

### 2.2.1. ບັນຫາແນວຄິດ-ຈິນຕະນາການ.

ບັນຫາໃຫຍ່ໃນສັງຄົມເຮົາຕໍ່ການສຶກສາທຸກມື້ແມ່ນ ກະແສແນວຄິດ-ຈິນຕະນາການຂອງຄົນບໍ່ມັກຮຽນວິຊາຊີບຊັ້ນຕົ້ນ,ຊັ້ນກາງ,ຊັ້ນສູງ;ແລ່ນນຳຄ່ານິຍົມທີ່ໄຝ່ຝັນຢາກຮຽນແຕ່ລະດັບປະລິນຍາຕີຢູ່ມະຫາວິທະຍາໄລ ແລະ ຢາກຮຽນແຕ່ຂະແໜງວິຊາທີ່ຕິດພັນກັບເສດຖະກິດ ໂດຍບໍ່ຄຳນຶງເຖິງຄວາມສາມາດ ແລະ ຜົນການຮຽນໃນຊັ້ນມັດທະຍົມຕອນປາຍຂອງຕົນ ເຊັ່ນ: ຕ້ອງການຮຽນແຕ່ວິຊາເສດຖະສາດ, ບໍລິຫານທຸລະກິດ, ບັນຊີການເງິນ, ການທະນາຄານ. ກະຊວງສຶກສາທິການ ແລະ ກິລາ ໄດ້ມີຄວາມພະຍາຍາມກໍ່ສ້າງ, ປັບປຸງ ແລະ ຂະຫຍາຍໂຮງຮຽນວິຊາຊີບ,ວິທະຍາໄລເຕັກນິກຢູ່ບັນດາແຂວງຕ່າງໆ. ປະຈຸບັນທຸກໆແຂວງມີໂຮງຮຽນວິຊາຊີບຂອງລັດ ເພື່ອຮອງຮັບຜູ້ທີ່ຮຽນຈົບສາຍສາມັນສຶກ

ສາໄດ້ເຂົ້າຮຽນຕໍ່ວິຊາຊີບລະດັບຊັ້ນຕົ້ນ, ຊັ້ນກາງ, ຊັ້ນສູງໃຫ້ໄດ້ຫຼາຍຂຶ້ນ ຊຶ່ງແຕ່ລະປີສະຖາບັນອາຊີວະສຶກສາຂອງລັດສາມາດຮັບນັກຮຽນເຂົ້າຮຽນໄດ້ 16,000 -17,000 ຄົນ; ແຕ່ໃນພາກປະຕິບັດຕົວຈິງນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນ, ຕອນປາຍແລ້ວ ຊໍ້າພັດບໍ່ສົນໃຈໄປຮຽນວິຊາຊີບ.ບັນດາພໍ່ແມ່ ແລະ ຜູ້ປົກຄອງນັກຮຽນເອງ ກໍບໍ່ສົ່ງເສີມໃຫ້ລູກຫຼານຂອງຕົນໄປຮຽນວິຊາຊີບໃນລະດັບດັ່ງກ່າວ. ສົກຮຽນ 2011 - 2012 ຜ່ານມາ ມີຜູ້ສະໝັກມາຮຽນຢູ່ສະຖາບັນອາຊີວະສຶກສາຂອງລັດພຽງແຕ່ 8,309 ຄົນ ຫຼື ປະມານ 50% ຂອງຈໍານວນທີ່ສາມາດຮັບໄດ້ເທົ່ານັ້ນ. ໃນສົກຮຽນດຽວກັນນັ້ນ ມີຜູ້ສະໝັກ ແລະ ເຂົ້າຮຽນຢູ່ມະຫາວິທະຍາໄລ ໂດຍສະເພາະແມ່ນ 4 ມະຫາວິທະຍາໄລທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ມີເຖິງ 20,019 ຄົນ. ອັດຕາສ່ວນນັກສຶກສາທີ່ຮຽນຊັ້ນສູງ ແລະ ມະຫາວິທະຍາໄລມີເຖິງ 1,987 ຄົນ ຕໍ່ປະຊາກອນ 100,000 ຄົນ. ສ່ວນອາຊີວະສຶກສາລະດັບຊັ້ນກາງມີພຽງແຕ່ 295 ຄົນຕໍ່ປະຊາກອນ 100,000 ຄົນ. ອີກດ້ານໜຶ່ງ ຕາມການວິໄຈຂໍ້ມູນຂອງຊ່ຽວຊານຕ່າງປະເທດໃນການຕີລາຄາການປະຕິບັດແນວທາງປ່ຽນແປງໃໝ່ຂອງພັກໃນຂະແໜງການສຶກສາແລະ ກິລາຢູ່ ສ.ປ.ປ ລາວ ເຮົາໄດ້ພົບວ່າໂຄງປະກອບຂອງການກໍ່ສ້າງກໍາລັງແຮງງານລາວແມ່ນ: ນັກວິຊາການຊັ້ນສູງ 8ຄົນຕໍ່ຊັ້ນກາງ 1 ຄົນ ແລະ ຊັ້ນຕົ້ນ 2 ຄົນ ຊຶ່ງປີ້ນກັນ ຫລື ກົງກັນຂ້າມກັບໂຄງປະກອບການກໍ່ສ້າງກໍາລັງແຮງງານຂອງບັນດາປະເທດທີ່ພັດທະນາແລ້ວ ຄື: ນັກວິຊາການລະດັບຊັ້ນສູງ 1 ຄົນ ຕໍ່ຊັ້ນກາງ 3 ຄົນ ແລະ ຊັ້ນຕົ້ນ 10 ຄົນ. ບັນດາຂໍ້ມູນທີ່ກ່າວມາຂ້າງເທິງນັ້ນສະແດງວ່າ ປະຈຸບັນນີ້ກະແສແນວຄິດທີ່ພົ້ນເດັ່ນຂອງຄົນລາວ ແມ່ນມີຄ່ານິຍົມແບບຜິດໆ, ແລ່ນນໍາແຕ່ກະແສຄວາມຮູ້ສຶກ,ຄ່ານິຍົມອາດຍາດັ່ງເດີມ, ແລ່ນນໍາແຕ່ຕ້ອງການປະກາສະນີຍະບັດ, ຄ່ານິຍົມປອມແປງຄວາມຮູ້, ຢາກຮຽນແຕ່ວິຊາທີ່ຕົນຄິດວ່າມີຜົນປະໂຫຍດສູງຕໍ່ຕົນເອງ ແລະ ຄອບຄົວ ໂດຍບໍ່ຄໍານຶງເຖິງລະດັບຄວາມສາມາດໃນການຮຽນຂອງຕົນເອງ ແລະ ບໍ່ຄິດເຖິງວ່າ ຮຽນຈົບວິຊາຊີບໃດໜຶ່ງແລ້ວ ຕ້ອງຫາວຽກເຮັດງານທໍາໄດ້

ງ່າຍ ແລະ ສາມາດສ້າງລາຍຮັບໄດ້ດີ. ດ້ວຍເຫດນີ້ສະພາບຢູ່ລາວເຮົາປະຈຸບັນຈຶ່ງມີສະພາບຂາດເຂີນກຳລັງແຮງງານທີ່ມີສີມືດີ, ຈຳນວນນັກວິຊາການທີ່ເຮັດວຽກຢູ່ແຕ່ລະຂະແໜງການ ແລະ ຢູ່ແຕ່ລະຂັ້ນມີສະພາບເຫຼືອບໍ່ພໍ, ຂາດພະນັກງານວິຊາການທີ່ມີຄວາມສາມາດໃນການນຳພາເຮັດ, ນຳພາສ້າງ, ນຳພາປະຕິບັດຕົວຈິງ; ແຕ່ຜູ້ທີ່ຮຽນຈົບປະລິນຍາຕີໃນບາງວິຊາ ຊ້ຳພັດບໍ່ມີວຽກເຮັດງານທຳເປັນຈຳນວນຫຼາຍສົມຄວນ. ຖ້າກະແສແນວຄິດຍັງຄົງຕົວຢູ່ໃນສັງຄົມຕໍ່ໄປ ກໍ່ຍິ່ງຈະບໍ່ເປັນຜົນດີຕໍ່ແນວທາງການປ່ຽນແປງໃໝ່ຂອງພັກ.

### 2.2.2. ບັນຫາການພັດທະນາຊັບພະຍາກອນມະນຸດໃນຂົງເຂດສຶກສາ.

ຂະແໜງການສຶກສາ ແລະ ກິລາເປັນຂະແໜງໃຈກາງໃນການພັດທະນາຊັບພະຍາກອນມະນຸດເພື່ອສະໜອງກຳລັງແຮງງານທີ່ມີຄຸນນະພາບໃຫ້ແກ່ການພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ. ຄຸນນະພາບຂອງຊັບພະຍາກອນມະນຸດແມ່ນຂຶ້ນກັບຄຸນນະພາບຂອງລະບົບການສຶກສາ ແລະ ວິທີການກໍ່ສ້າງຄົນຢູ່ໃນ ແລະ ນອກໂຮງຮຽນ. ໃນໄລຍະຜ່ານມາ ການພັດທະນາຊັບພະຍາກອນມະນຸດໃນຂົງເຂດສຶກສາ ແລະ ກິລາ ບໍ່ທັນບັນລຸຈຸດໝາຍທັງທາງດ້ານປະລິມານ ແລະ ຄຸນນະພາບ. ສຳລັບດ້ານປະລິມານ, ຂະແໜງການສຶກສາ ແລະ ກິລາ ກໍ່ບໍ່ທັນສາມາດບັນລຸຕົວເລກຄາດໝາຍທີ່ພັກໄດ້ວາງອອກ. ສິ່ງທີ່ໜ້າເປັນຫ່ວງແມ່ນປະຊາຊົນທີ່ຢູ່ເຂດຫ່າງໄກສອກຫຼີກຈຳນວນຫຼາຍສົມຄວນ ຍັງບໍ່ທັນໄດ້ຮັບການສຶກສາຂັ້ນພື້ນຖານ. ການກິລາ - ກາຍຍະກຳບໍ່ຂະຫຍາຍຕົວໄປທົ່ວທຸກສະຖາບັນການສຶກສາ ແລະ ທຸກຂົງເຂດການຜະລິດ; ຍັງບໍ່ທັນເອົາວຽກງານພະລະສຶກສາ ແລະ ກິລາໃນໂຮງຮຽນຕິດພັນກັບການກໍ່ສ້າງນັກກິລາລະດັບລະດັບສູງຢ່າງແຂງແຮງ. ດ້ານຄຸນນະພາບຂອງການສຶກສາ: ການສຶກສາທຸກຂັ້ນ, ທຸກສາຍທັງໃນ ແລະ ນອກລະບົບໂຮງຮຽນເວົ້າລວມແລ້ວ ຄຸນນະພາບບໍ່ສູງເທົ່າທີ່ຄວນ; ອາດເວົ້າໄດ້ວ່າຍັງຕ່ຳກວ່າຈຸດໝາຍຂອງການກໍ່ສ້າງຄົນລາວທີ່ກຳນົດໄວ້ໃນຫລັກສູດ. ຊັບພະຍາກອນມະນຸດທີ່ຈົບຈາກສະຖາບັນການສຶກສາຕ່າງໆ ໂດຍສະເພາະຜູ້ທີ່ຈົບຈາກສະຖາບັນອາຊີວະສຶກສາ ແລະ ມະຫາວິທະຍາໄລ ບໍ່ໄດ້

ມາດຕະຖານດ້ານຄຸນນະພາບ ນັບທັງດ້ານຄວາມຮູ້, ຄວາມສາມາດ ແລະ ຄຸນສົມບັດ.ດ້ານຄວາມຮູ້ກໍ່ບໍ່ສົມຄູ່ກັບຊັ້ນປະກາສະນີຍະບັດທີ່ໄດ້ຮັບ; ດ້ານຄວາມສາມາດນໍາຄວາມຮູ້ໄປນໍາໃຊ້ພຶດຕິກໍາຕົວຈິງກໍ່ບໍ່ເດັ່ນ, ບາງຄົນມີຄວາມຮູ້ ແຕ່ນໍາໃຊ້ຄວາມຮູ້ທີ່ຮຽນຈົບມານັ້ນບໍ່ເປັນ, ບໍ່ມີຫົວຄິດປະດິດສ້າງ; ດ້ານແນວຄິດຄຸນສົມບັດ ກໍ່ບໍ່ທັນດີ,ບໍ່ທັນໜັກແໜ້ນ. ຖ້າທຽບກັບມາດຕະຖານການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດຂອງບັນດາປະເທດໃນຂົງເຂດດຽວກັນແລ້ວ ກໍ່ບໍ່ເທົ່າທຽມເພິ່ນໄດ້. ຜູ້ເປັນນັກກິລາຈໍານວນໜຶ່ງ ກໍ່ບໍ່ມີຄຸນສົມບັດຂອງນັກກິລາທີ່ດີ, ບໍ່ທັນມີນໍ້າໃຈນັກກິລາຢ່າງແທ້ຈິງ, ຂາດວິໄນຂອງຄວາມເປັນນັກກິລາ, ບໍ່ນັບຖືກົດລະບຽບຂອງການແຂ່ງຂັນ ແລະ ອື່ນໆ.

ບັນຫາດັ່ງກ່າວເກີດມາຈາກການກະຈາຍງົບປະມານຂອງລັດເພື່ອພັດທະນາການສຶກສາໃນເຂດຫ່າງໄກສອກຫຼີກຍັງບໍ່ທັນສອດຄ່ອງກັບນະໂຍບາຍຂອງພັກ; ຂາດຄວາມເອົາໃຈໃສ່ຕໍ່ຈຸດໝາຍ ແລະ ມາດຕະຖານການກໍ່ສ້າງຄົນຂອງສະຖາບັນການສຶກສາແຕ່ລະແຫ່ງ. ສິ່ງສໍາຄັນກວ່າໝູ່ໝົດ ແມ່ນຜູ້ບໍລິຫານການສຶກສາ ຂາດຄວາມເອົາໃຈໃສ່ຕໍ່ການຄວບຄຸມ, ຕິດຕາມ ແລະ ປະເມີນຜົນການຮຽນຂອງນັກຮຽນ ແລະ ການສອນຂອງຄູຢ່າງເປັນປະຈໍາໃນແຕ່ລະໄລຍະຊຶ່ງບັນຫາເຫລົ່ານີ້ກໍ່ກາຍເປັນປະເດັນທີ່ຮີບຮ້ອນແກ້ໄຂໃຫ້ທັນເວລາ.

## 2.2.3. ບັນຫາກົນໄກຄຸ້ມຄອງ ແລະ ນິຕິກໍາກ່ຽວກັບການບໍລິຫານ.

ກົນໄກການຄຸ້ມຄອງບໍລິຫານການສຶກສາ ແລະ ກິລາ ຍັງບໍ່ທັນສອດຄ່ອງກັບຍຸດທະສາດການພັດທະນາການສຶກສາໃນໄລຍະໃໝ່. ການຈັດການອາຊີວະສຶກສາ ແລະ ການສຶກສາຊັ້ນສູງໃນລະດັບມະຫາພາກຍັງມີຫລາຍຂະແໜງການຈັດຕັ້ງ ແລະ ສ້າງຊັບພະຍາກອນມະນຸດເອົາເອງພໍໃຜພໍລາວ. ການຄຸ້ມຄອງການສຶກສາຢູ່ຂະແໜງການເຫລົ່ານັ້ນກໍ່ຍັງບໍ່ໄປຕາມລະບຽບກົດໝາຍວ່າດ້ວຍການສຶກສາທີ່ແທ້ຈິງ. ການແບ່ງຂັ້ນຄຸ້ມຄອງການສຶກສາ ແລະ ກິລາພາຍໃນຂະແໜງການສຶກສາ ແລະ ກິລາ ແລະ ລະຫວ່າງຂະແໜງການສຶກສາ ແລະ ກິລາກັບຂະແໜງການອື່ນໆຫລາຍອັນບໍ່ທັນຈະແຈ້ງ.

ໂຄງປະກອບຂອງການພັດທະນາຊັບພະຍາກອນມະນຸດ ບໍ່ທັນສອດຄ່ອງກັບໂຄງປະກອບຂອງແຮງງານ.ການຄຸ້ມຄອງການພັດທະນາຊັບພະຍາກອນມະນຸດ ກໍ່ບໍ່ມີລັກສະນະລວມສູນ ແລະ ບໍ່ສອດຄ່ອງກັບຄວາມຕ້ອງການຂອງກຳລັງແຮງງານ. ການກໍ່ສ້າງຊັບພະຍາກອນມະນຸດຂອງຂະແໜງການຕ່າງໆ ນັບທັງພາກລັດ ແລະ ພາກເອກະຊົນ ແມ່ນສ້າງພໍໃຜພໍລາວ, ສ້າງຕາມກະແສນິຍົມຂອງຜູ້ຕ້ອງການຮຽນ.ນິຕິກຳຕ່າງໆກ່ຽວກັບການຄຸ້ມຄອງ - ບໍລິຫານການສຶກສາ ແລະ ກິລາ ຍັງບໍ່ທັນຄົບຖ້ວນ. ສິ່ງທີ່ມີແລ້ວ ກໍ່ມີເນື້ອໃນບາງດ້ານບໍ່ທັນສອດຄ່ອງກັບນະໂຍບາຍ ແລະ ຫລັກວິຊາການ. ການຈັດຕັ້ງປະຕິບັດບາງນິຕິກຳຍັງບໍ່ທັນຮັດກຸມ, ບາງເນື້ອໃນຂອງນິຕິກຳ ຍັງບໍ່ທັນຖືກຈັດຕັ້ງປະຕິບັດ ຫຼືບາງເນື້ອໃນ ກໍ່ໄດ້ນຳໄປຈັດຕັ້ງປະຕິບັດ ແຕ່ຫາກບໍ່ທົ່ວເຖິງ.

ກົນໄກ, ນິຕິກຳກ່ຽວກັບການບໍລິຫານ - ຄຸ້ມຄອງການສຶກສາ ແລະ ກິລາ, ການຈັດຕັ້ງປະຕິບັດນິຕິກຳເຊັ່ນນີ້ ບໍ່ຕອບສະໜອງໄດ້ກັບການພັດທະນາການສຶກສາ ເພື່ອພັດທະນາຊັບພະຍາກອນມະນຸດ. ດັ່ງນັ້ນ ມັນຈຶ່ງກາຍເປັນປະເດັນບັນຫາໜຶ່ງທີ່ ພວກເຮົາຈະຕ້ອງໄດ້ພິຈາລະນາແກ້ໄຂໂດຍໄວ.

## 2.2.4. ບັນຫາການຂະຫຍາຍການສຶກສາເພື່ອລຶບລ້າງຄວາມທຸກຍາກ.

ດ້ານຕາໜ່າງການສຶກສາ ເຖິງວ່າໄດ້ມີຄວາມພະຍາຍາມສ້າງໂຮງຮຽນໃນເຂດຫ່າງໄກສອກຫລີກ ແລະ ເຂດຊົນເຜົ່າແລ້ວກໍ່ຕາມ; ແຕ່ການພັດທະນາການສຶກສາໃນເຂດດັ່ງກ່າວບໍ່ທັນທົ່ວເຖິງເທື່ອ. ບັນດາໂຮງຮຽນຂະຫຍາຍຕົວໄວແຕ່ໃນຕົວເມືອງ ແລະ ເຂດທົ່ງພຽງ ທີ່ມີຄວາມຈະເລີນແລ້ວ.ສ່ວນຢູ່ເຂດຊົນນະບົດ, ເຂດຫ່າງໄກສອກຫລີກ ແລະ ເຂດຊົນເຜົ່າບັນດາໂຮງຮຽນປະເພດຕ່າງໆຍັງຂະຫຍາຍຕົວຊ້າຫລາຍ. ຕາມການລົງສຳຫລວດ ແລະ ຈາກສະຖິຕິທີ່ເກັບກຳໄດ້ເຫັນວ່າຫຼາຍບ້ານບໍ່ທັນມີໂຮງຮຽນ, ບ້ານທີ່ມີແລ້ວ ໂຮງຮຽນກໍ່ບໍ່ໄດ້ມາດຖານ,ສິ່ງອຳນວຍຄວາມສະດວກໃຫ້ແກ່ການຮຽນ - ການສອນເຊັ່ນ: ຫ້ອງທົດລອງ, ຫ້ອງສະໝຸດ, ເຄື່ອງທົດລອງ, ອຸປະກອນຮັບໃຊ້ການສອນ-ການຮຽນ ນັບທັງອຸປະກອນຮັບໃຊ້ການກິລາ-ກາຍຍະສຶກສາຍັງຂາດເຂີນຫລາຍ. ຄວາມ

ເຂົ້າໃຈຂອງສັງຄົມຕໍ່ຄວາມໝາຍຄວາມສຳຄັນຂອງການພັດທະນາການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດເວົ້າລວມແລ້ວຍັງບໍ່ທັນເລິກເຊິ່ງ. ຄະນະນຳຢູ່ບາງທ້ອງຖິ່ນກໍ່ເຂົ້າບໍ່ຖືກຕ້ອງຕໍ່ການສຶກສາ. ດ້ວຍເຫດນັ້ນ ການລົງທຶນຂອງລັດໃສ່ການສຶກສາຈຶ່ງບໍ່ຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຕົວຈິງ.ຄະນະນຳຈຳນວນໜຶ່ງ ກໍ່ຮ້ອງຂໍນຳແຕ່ໂຄງການຊ່ວຍເຫລືອ ຫຼື ກູ້ຢືມຂອງຕ່າງປະເທດໃຫ້ລົງທຶນປຸກສ້າງໂຮງຮຽນ ແລະ ສະໜອງສິ່ງອຳນວຍຄວາມສະດວກຕໍ່ການຮຽນ-ການສອນ. ການປະຕິບັດແຜນການເພື່ອບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາໃນປີ 2015 ຍັງມີຫຼາຍຕົວຊີ້ບອກທີ່ຈະຕ້ອງໄດ້ເອົາໃຈໃສ່ບຸກບືນເຊັ່ນ: ອັດຕາລອດເຫຼືອ ປ.1-ປ.5 ໃຫ້ບັນລຸ 95% ຊຶ່ງມາຮອດປີ 2012 ນີ້ ບັນລຸໄດ້ພຽງ 70%, ຍັງເຫລືອອີກ27%; ອັດຕາຄ້າງຫ້ອງຂອງຊັ້ນປະຖົມໃຫ້ຍັງເຫຼືອ 2% ຊຶ່ງໃນປີ 2012 ແມ່ 10.5%. ສຳເລັດການປະກາດຈົບຊັ້ນສຶກສາລະບົບບຳລຸງແລ້ວ 3 ແຂວງ ແລະ 110ເມືອງ, ຍັງເຫຼືອອີກ 14 ແຂວງ ແລະ 36 ເມືອງບໍ່ທັນສຳເລັດການປະກາດຈົບຊັ້ນປະຖົມບຳລຸງ. ນັກຮຽນຢູ່ເຂດຊົນນະບົດຫ່າງໄກສອກຫຼີກຈຳນວນຫລາຍສົມຄວນບໍ່ສາມາດເຂົ້າຮຽນຕໍ່ຢູ່ໂຮງຮຽນມັດທະຍົມ, ສະຖາບັນອາຊີວະສຶກສາ ແລະ ການສຶກສາຊັ້ນສູງໄດ້.

ຈາກສະພາບດັ່ງກ່າວມານັ້ນ ຈຶ່ງເຮັດໃຫ້ການຂະຫຍາຍການສຶກສາ ເພື່ອພັດທະນາຊັບພະຍາກອນມະນຸດລະຫວ່າງເຂດຕົວເມືອງ, ເຂດທົ່ງພຽງ, ເຂດຊົນນະບົດຫ່າງໄກສອກຫຼີກ, ລະຫວ່າງເພດ ແລະ ລະຫວ່າງເຜົ່າ ຍັງຫຼຸດໂຕກັນຫລາຍ. ດ້ວຍເຫດນີ້ ຈຶ່ງເກີດມີສະພາບການຂາດພະນັກງານວິຊາການ, ກຳມະກອນທີ່ມີຄຸນນະພາບຢູ່ທ້ອງຖິ່ນ. ສຳລັບຂະແໜງການສຶກສາເອງ ກໍ່ຂາດຄູທີ່ຊຳນິຊຳນານໃນການສິດສອນນັກຮຽນຢູ່ທ້ອງຖິ່ນ.ໃນຊຸມປີຜ່ານມາລັດຖະບານໄດ້ສະໜອງໂຄຕາຄູໃຫ້ທ້ອງຖິ່ນທີ່ຫຍຸ້ງຍາກ; ແຕ່ຜູ້ສະໝັກໄປບັນຈຸເປັນຄູເພື່ອປະຕິບັດໜ້າທີ່ສິດສອນຢູ່ເຂດດັ່ງກ່າວ ມີຈຳນວນໜ້ອຍທີ່ສຸດ. ສະນັ້ນມັນຈຶ່ງຮຽກຮ້ອງໃຫ້ພວກເຮົາແກ້ໄຂສະພາບຕ່າງໆເຫຼົ່ານີ້ ໃຫ້ລຸລ່ວງໄປໂດຍໄວ.

## III. ທິດທາງແກ້ໄຂໃນຕໍ່ໜ້າ:

ເພື່ອແກ້ໄຂບັນຫາຕ່າງໆຂ້າງເທິງນັ້ນ; ກະຊວງສຶກສາທິການ ແລະ ກິລາ ຈຶ່ງວາງຫຼັກການ ແລະ ວິທີການ ເຊິ່ງມີລາຍລະອຽດດັ່ງຕໍ່ໄປນີ້:

### 3.1. ທິດທາງລວມ.

ເນື່ອງຈາກວ່າ "ການສຶກສາ" ເປັນປັດໄຈຕົ້ນຕໍ ແລະ ເປັນໃຈກາງຂອງການພັດທະນາຊັບພະຍາກອນມະນຸດ. ດັ່ງນັ້ນ ຢາກໃຫ້ຊັບພະຍາກອນມະນຸດລາວ ຫຼື ຄົນລາວ ກາຍເປັນຊັບພະຍາກອນທີ່ມີຄຸນຄ່າ ແລະ ຄຸນນະພາບສູງ ຕ້ອງບຸກທະລຸດ້ານການສຶກສາ,ຕ້ອງລົງທຶນໃສ່ການສຶກສາໃຫ້ສົມຄູ່ກັບຄາດໝາຍສູ້ຊົນທີ່ພັກເຮົາໄດ້ກຳນົດອອກ ເພື່ອສ້າງຄົນຕອບສະໜອງໃຫ້ແກ່ການພັດທະນາເສດຖະກິດ - ສັງຄົມຂອງຊາດ,ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ. ສັງລວມແລ້ວຄາດໝາຍຕົ້ນຕໍເພື່ອບັນລຸໄດ້ໃນການບຸກທະລຸທາງດ້ານການພັດທະນາຊັບພະຍາກອນມະນຸດແມ່ນ: ຖືເອົາວຽກງານການສຶກສາ ແລະ ພັດທະນາຊັບພະຍາກອນມະນຸດ ເປັນປັດໃຈສຳຄັນຂອງການພັດທະນາ ຮັບປະກັນໃຫ້ການສຶກສາຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບຢ່າງຕໍ່ເນື່ອງ, ສືບຕໍ່ປະຕິຮູບລະບົບການສຶກສາແຫ່ງຊາດຢ່າງຕັ້ງໜ້າ,ສົ່ງເສີມ ແລະ ເຊີດຊູສະຖານະພາບກຽດສັກສີຂອງຄູອາຈານ, ສົ່ງເສີມຜູ້ຮຽນເກັ່ງ, ຜູ້ມີພອນສະຫວັນ ໄດ້ເຂົ້າຮຽນໃນລະດັບສູງຂຶ້ນ, ປັບປຸງຍົກລະດັບການຄົ້ນຄ້ວາທາງດ້ານວິທະຍາສາດຢູ່ຕາມສະຖາບັນການສຶກສາລະດັບຕ່າງໆ,ປັບປຸງລະບົບການຄຸ້ມຄອງ-ບໍລິຫານການສຶກສາ, ເອົາໃຈໃສ່ຫຼາຍຂຶ້ນຕໍ່ການຄຸ້ມຄອງອະນຸບານສຶກສາ, ການສຶກສາພາກບັງຄັບ ແລະ ການສຶກສາຊົນເຜົ່າ. ປັບປຸງສະຖາບັນອາຊີວະສຶກສາ ແລະ ມະຫາວິທະຍາໄລໃຫ້ມີຄຸນນະພາບສູງຂຶ້ນ ເພື່ອສ້າງບຸກຄະລະກອນປະເພດຕ່າງໆ ເຊັ່ນ: ກຳມະກອນວິຊາຊີບ, ນາຍຊ່າງ, ນັກວິຊາການດ້ານຕ່າງໆ, ວິສະວະກອນ, ຜູ້ຄຸ້ມຄອງບໍລິຫານ, ຜູ້ປະກອບການ, ຜູ້ຈັດການ ໃຫ້ສອດຄ່ອງກັບຄວາມຕ້ອງການຕົວຈິງໃນແຕ່ລະຂົງເຂດວຽກງານ ແລະ ໃຫ້ຄົນລາວມີຄວາມຮູ້,ຄວາມສາມາດປະກອບອາຊີບໄດ້ຢ່າງໝັ້ນຄົງ, ມີລາຍຮັບສູງຂຶ້ນ ແລະ ກໍຕ້ອງຮັບປະກັນ

ບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ.

## 3.2. ທິດທາງສະເພາະ.

### 3.2.1. ຕັ້ງໜ້າບຸກທະລຸທັງ 4 ດ້ານ:

ເພື່ອບັນລຸບັນດາຄາດໝາຍດັ່ງກ່າວຂ້າງເທິງນັ້ນ; ຂະແໜງການສຶກສາ ແລະ ກິລາ ຕ້ອງຕັ້ງໜ້າບຸກທະລຸທັງ 4 ດ້ານໄປພ້ອມໆກັນຢ່າງແຂງແຮງ.ໝາຍຄວາມວ່າ ອັນໃດ, ບັນຫາໃດ, ຂອດໃດເປັນສິ່ງອັດຕັນ, ກີດໜ່ວງ, ກີດຂວາງຂອງການພັດທະນາຂະແໜງການສຶກສາ ແລະກິລາ ພວກເຮົາຕ້ອງພ້ອມພາກັນບຸກທະລຸໃຫ້ໄດ້ເປັນຕົ້ນ:

**(1) ບຸກທະລຸທາງດ້ານແນວຄິດ ຈິນຕະນາການ:** ໝາຍຄວາມວ່າພວກເຮົາຈະໄດ້ແກ້ໄຂທັດສະນະ ຄວາມຮັບຮູ້ທີ່ບໍ່ຖືກຕ້ອງ, ເປັນອຸປະສັກ ແລະ ຫຍໍ້ທໍ້ຕໍ່ການພັດທະນາ ໂດຍສະເພາະທັດສະນະທີ່ກີດໜ່ວງຖ່ວງດຶງ ຕໍ່ການພັດທະນາການສຶກສາ ແລະ ກິລາ ເຊັ່ນ: ແນວຄິດເຫັນແຕ່ສິດຜົນປະໂຫຍດສ່ວນຕົວ,ຖືເບົາສິດຜົນປະໂຫຍດສ່ວນລວມ, ແລ່ນນຳແຕ່ຄ່ານິຍົມ ແລະ ກະແສສັງຄົມທີ່ເຫັນແກ່ໄດ້, ບໍ່ຄຳນຶງ ແລະ ບໍ່ນັບຖືລະບຽບກົດໝາຍບ້ານເມືອງ; ແນວຄິດຂີ້ຄ້ານມັກງ່າຍ, ເອື່ອຍອີງໃສ່ແຕ່ຄົນອື່ນ, ບໍ່ລົງເລິກເຖິງວຽກງານຕົວຈິງ; ແນວຄິດ ແລະທັດສະນະມີແຕ່ເວົ້າ ແຕ່ບໍ່ເຮັດຫຼືເຮັດບໍ່ເປັນ, ບໍ່ຮູ້ເຮັດ ແຕ່ບໍ່ຖາມຜູ້ອື່ນ; ແນວຄິດອິດສາ, ຢ້ານລື່ນຢ້ານເຫຼືອ, ເຫັນແກ່ຕົວ, ບໍ່ເຫັນຜູ້ອື່ນ, ກິນຈັກຕາຍຕົວ; ແນວຄິດບໍ່ກ້າເວົ້າຈຸດອ່ອນຂອງຕົນດ້ວຍຄວາມຈິງ ຫຼືແນວຄິດທີ່ເຄີຍເຮັດຜ່ານມາແນວໃດກໍ່ຢາກເຮັດແຕ່ແນວນັ້ນ, ບໍ່ກ້າປ່ຽນແປງ, ເຮັດຜິດ ແຕ່ບໍ່ຮັບຜິດ, ບໍ່ພັດທະນາຕົນເອງ, ເວົ້າປະຈິບປະແຈງ, ເຮັດບໍ່ໄດ້ ແຕ່ອ້າງຜົນງານ ເຊັ່ນ: ລາຍງານແບບດອກໄມ້, ອັນໃດກໍ່ດີໝົດ, ອັນອ່ອນບໍ່ມີ ຫຼື ມີກໍ່ໜ້ອຍ ຫຼືວ່າທັດສະນະເບິ່ງໂລກໃນແງ່ຮ້າຍເກີນໄປ, ອັນໃດກໍ່ອ່ອນໝົດ, ບໍ່ເຫັນດ້ານດີຈັກອັນ ແລະ ອື່ນໆ. ບັນດາແນວຄິດຈິນຕະນາການດັ່ງກ່າວມາຂ້າງເທິງນີ້ຫາກເກີດມີຢູ່ບ່ອນໃດ,ກົມໃດພະແນກການສຶກສາໃດ ແລະ ສະຖາບັນການສຶກສາແຫ່ງໃດ ຜູ້ບໍລິຫານການ

ສຶກສາ ຕ້ອງມີຄວາມຮັບຜິດຊອບແກ້ໄຂໃຫ້ທັນການ, ບໍ່ປະປ່ອຍໃຫ້ແນວຄິດຈິນຕະນາການນີ້ແຜ່ຂະຫຍາຍໄປສູ່ບ່ອນອື່ນ ຊຶ່ງຈະສ້າງຄວາມເສື່ອມເສຍໃຫ້ແກ່ຂະແໜງການສຶກສາ ແລະ ກິລາ ແລະ ນຳຄວາມເສຍຫາຍມາສູ່ປະເທດຊາດ.

**(2) ບຸກທະລຸການສ້າງຊັບພະຍາກອນມະນຸດ:** ໝາຍຄວາມວ່າການສ້າງຄົນໂດຍສະເພາະແມ່ນການສ້າງຄູ, ສ້າງພະນັກງານວິຊາຊີບລະດັບຕ່າງໆຕ້ອງໃຫ້ມີຄຸນສົມບັດ, ມີຄວາມຮູ້ - ຄວາມສາມາດ ແລະ ມີຄວາມຮັບຜິດຊອບຢ່າງແທ້ຈິງ.ຢາກໄດ້ແນວນັ້ນພວກເຮົາ ຕ້ອງໄດ້ປ່ຽນຈິນຕະນາການກ່ຽວກັບແບບແຜນ, ວິທີການໃນການສັບຊ້ອນນັກຮຽນເຂົ້າຮຽນໃນສະຖາບັນອາຊີວະສຶກສາລະດັບຊັ້ນຕົ້ນ, ຊັ້ນກາງ, ຊັ້ນສູງ ແລະ ມະຫາວິທະຍາໄລຢ່າງມີແຜນການ; ປ່ຽນແນວຄວາມຄິດໄຝ່ຝັນຢາກຮຽນແຕ່ລະດັບປະລິນຍາຕີ, ປະລິນຍາໂທຢູ່ມະຫາວິທະຍາໄລຫັນມາຮຽນວິຊາຊີບນັບທັງຮຽນເປັນຄູສອນ ເພື່ອກໍ່ສ້າງກຳມະກອນວິຊາຊີບນາຍຊ່າງ, ນັກວິຊາການ,ວິສາວະກອນ, ນັກວິທະຍາສາດ, ນັກຄົ້ນຄ້ວາວິໄຈ, ນັກກິລາ, ຜູ້ຄຸ້ມຄອງບໍລິຫານ, ຜູ້ປະກອບການ, ຜູ້ຈັດການ ແລະ ອື່ນໆໃຫ້ມີຄຸນນະພາບ ແລະ ມີຈຳນວນພຽງພໍສາມາດຕອບສະໜອງກັບ ຄວາມຮຽກຮ້ອງຕ້ອງການ ຂອງຕະຫຼາດແຮງງານ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງປະເທດໂດຍໃຫ້ຕິດພັນຢ່າງສະໜິດແໜ້ນ ກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ - ສັງຄົມຢູ່ແຕ່ລະທ້ອງຖິ່ນ, ທ້ອງຖິ່ນໃດ ຕ້ອງການພະນັກງານວິຊາການດ້ານໃດຕ້ອງສ້າງພະນັກງານວິຊາການດ້ານນັ້ນໃຫ້ພຽງພໍ ໂດຍເລືອກເອົາຄົນໃນທ້ອງຖິ່ນນັ້ນມາຮຽນ, ເມື່ອຮຽນຈົບແລ້ວກໍ່ສົ່ງກັບຄືນທ້ອງຖິ່ນເດີມ ເພື່ອໄປນຳພາສ້າງສາ ແລະ ພັດທະນາຢູ່ທ້ອງຖິ່ນນັ້ນ.

ການບຸກທະລຸການພັດທະນາຊັບພະຍາກອນມະນຸດນັ້ນ ກ່ອນອື່ນໝົດແມ່ນຄົນຕ້ອງມີຄວາມຮູ້, ມີລະດັບ, ຮູ້ເຫດ, ຮູ້ຜົນ ຈຶ່ງສາມາດແກ້ໄຂວຽກງານໄດ້ ຫຼືວ່າຢາກປ່ຽນແນວຄິດຈິນຕະນາການເກົ່າ ຖ້າຄົນບໍ່ມີຄວາມຮູ້, ບໍ່ມີລະດັບກໍບໍ່ສາມາດປ່ຽນແປງໄດ້; ສະຫຼຸບແລ້ວການບຸກທະລຸທັງ 4 ດ້ານຕັດສິນກວ່າໝູ່ແມ່ນການບຸກທະລຸທາງດ້ານພັດທະນາຊັບພະຍາກອນມະນຸດ.ການສ້າງຊັບພະຍາກອນມະນຸດຕ້ອງບຸກທະລຸທາງດ້ານປະລິມານ ແລະ ຄຸນນະພາບໃຫ້ຄຽງຄູ່ກັນໄປ;

ໃນນັ້ນແມ່ນ ເລັງໃສ່ຄຸນນະພາບເປັນຕົ້ນຕໍ. ຄຸນນະພາບການສ້າງຊັບພະຍາກອນມະນຸດຕ້ອງໃຫ້ສະແດງອອກຊັບພະຍາກອນມະນຸດ (ຄົນ) ທີ່ພວກເຮົາສ້າງອອກມານັ້ນຕ້ອງເປັນຜູ້ທີ່ມີຄວາມຮູ້ທາງດ້ານວິທະຍາສາດທຳມະຊາດ, ວິທະຍາສາສັງຄົມ; ມີຄວາມສາມາດຕົວຈິງໃນໜ້າທີ່ວິຊາສະເພາະທີ່ໄດ້ຮຽນມາ. ຄວາມຮູ້, ຄວາມສາມາດນັ້ນ ຕ້ອງໃກ້ຄຽງ ຫຼື ເທົ່າທຽມກັບລະດັບຂອງພາກພື້ນ ແລະ ສາກົນ; ພ້ອມກັນນີ້ກໍ່ຍັງເປັນຄົນມີນ້ຳໃຈຮັກຊາດຕິດພັນກັບຮັກລະບອບໃໝ່ ແລະ ມີຄຸນສົມບັດສິນທຳ ປະຕິວັດ, ກຽມພ້ອມປະກອບສ່ວນປົກປັກຮັກສາ ແລະ ສ້າງສາພັດທະນາປະເທດ; ອີກດ້ານໜຶ່ງ ຄຸນນະພາບຂອງການສຶກສາທີ່ດີນັ້ນ ຍັງສະແດງອອກທີ່ໂຄງປະກອບຂອງຊັບພະຍາກອນມະນຸດທີ່ພວກເຮົາສ້າງອອກມາຕ້ອງສອດຄ່ອງ ແລະ ຕອບສະໜອງກັບໂຄງປະກອບຂອງການພັດທະນາເສດຖະກິດ - ສັງຄົມຂອງປະເທດ. ໝາຍຄວາມວ່າ ໂຄງປະກອບການສ້າງຊັບພະຍາກອມະນຸດຕ້ອງເປັນແບບຮູບທາດ. ການບຸກທະລຸດ້ານການພັດທະນາຊັບພະຍາກອນມະນຸດ ແມ່ນການບຸກທະລຸດ້ານການສຶກສາ ໃຫ້ມີຄຸນນະພາບສູງ, ລົງທຶນໃສ່ການສຶກສາໃຫ້ໄດ້ຕາມຄາດໝາຍ, ສ້າງຄົນເພື່ອຕອບສະໜອງການພັດທະນາເສດຖະກິດ - ສັງຄົມ, ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ. ສັງລວມແລ້ວ ຄາດໝາຍຕົ້ນຕໍເພື່ອບັນລຸໄດ້ໃນການບຸກທະລຸທາງດ້ານການພັດທະນາ ຊັບພະຍາກອນມະນຸດແມ່ນ: ຖືເອົາວຽກງານການສຶກສາ ແລະ ພັດທະນາຊັບພະຍາກອນມະນຸດເປັນປັດໃຈສຳຄັນຂອງການພັດທະນາຢ່າງແທ້ຈິງ, ຮັບປະກັນໃຫ້ການພັດທະນາການສຶກສາຂອງຊາດຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບຢ່າງຕໍ່ເນື່ອງ.

**(3) ບຸກທະລຸດ້ານກົນໄກຄຸ້ມຄອງ ແລະ ນິຕິກຳດ້ານການບໍລິຫານ:** ໝາຍຄວາມວ່າ ຕ້ອງແກ້ໄຂລະບຽບການທີ່ມີຫຼາຍຂັ້ນຫຼາຍຂອດ, ຊ້ຳຊ້ອນ, ອືດອັດຊັກຊ້າ ຊຶ່ງເປັນການກີດໜ່ວງຖ່ວງດຶງການພັດທະນາການສຶກສາ ແລະ ກິລາ. ສະນັ້ນ ຈະໄດ້ເບິ່ງຄືນບັນດານິຕິກຳ, ກົນໄກ, ຂໍ້ກຳນົດ, ລະບຽບຫຼັກການຕ່າງໆທີ່ນຳໃຊ້ຢູ່ໃນປະຈຸບັນ; ອັນໃດທີ່ເຫັນວ່າ ຍັງມີປະໂຫຍດຕ້ອງສົ່ງເສີມນຳໃຊ້, ອັນໃດທີ່ເຫັນວ່າບໍ່ສອດຄ່ອງ ກໍຕ້ອງກ້າຕັດສິນໃຈປັບປຸງ, ປ່ຽນແປງ, ແກ້ໄຂ

ເຊັ່ນ: ມາດຕະຖານຈຳນວນນັກຮຽນຕໍ່ຄູສອນ, ມາດຕະຖານຫ້ອງຮຽນ-ໂຮງຮຽນ ມາດຕະຖານຂອງນັກກິລາ, ລະບຽບການແຂ່ງຂັນກິລາປະເພດຕ່າງໆ, ລະບຽບການຈັດການຮຽນ - ການສອນ, ລະບຽບການສອບເສັງເລື່ອນຊັ້ນ, ເລື່ອນຊັ້ນ, ການສອບເສັງເຂົ້າຮຽນໃນລະດັບຕ່າງໆຢູ່ພາຍໃນ ແລະ ຕ່າງປະເທດ, ລະບຽບການອອກໃບປະກາດ, ເງື່ອນໄຂ ແລະ ມາດຕະຖານຂອງຜູ້ທີ່ໄດ້ຮັບປະກາສະນີຍະບັດແດງ, ລະບຽບການມອບ - ຮັບປະກາສະນີຍະບັດ, ລະບຽບການນຸ່ງຖື, ການແຕ່ງກາຍຂອງນັກຮຽນ-ນັກສຶກສາ, ການຄຸ້ມຄອງໂຄງການຕ່າງໆ ແລະ ອື່ນໆ.

**(4) ບຸກທະລຸການແກ້ໄຂຄວາມທຸກຍາກ:** ຄວາມທຸກຍາກຂອງປະຊາຊົນຢູ່ພາຍໃນຂະແໜງການສຶກສາ ແລະ ກິລາ ປະກອບດ້ວຍຄວາມທຸກຍາກທີ່ຄົງຕົວຢູ່ໃນຄົນ 2 ກຸ່ມໃຫຍ່ຄື: ຄວາມທຸກຍາກຂອງບຸກຄະລາກອນທາງການສຶກສາ ແລະ ກິລາ ແລະ ຄວາມທຸກຍາກຂອງປະຊາຊົນທົ່ວໄປ ຊຶ່ງມີພັນທະສົ່ງລູກໄປໂຮງຮຽນ. ສະນັ້ນ ການແກ້ໄຂຄວາມທຸກຍາກ ກໍ່ຕ້ອງບຸກທະລຸແກ້ໄຂຄວາມທຸກຍາກຂອງຄົນ 2 ກຸ່ມນີ້ເປັນຕົ້ນຕໍ ຄື:

ຕໍ່ບຸກຄະລາກອທາງດ້ານການສຶກສາ: ກ່ອນອື່ນໝົດ ແມ່ນຕ້ອງຍົກຊີວິດການເປັນຢູ່ຂອງຄູອາຈານສອນໃຫ້ສູງຂຶ້ນ ດ້ວຍການເອົາໃຈໃສ່ຈັດຕັ້ງປະຕິບັດບັນດານິຕິກຳຕ່າງໆ ທີ່ເປັນນະໂຍບາຍຕໍ່ຄູອາຈາສອນໃຫ້ເປັນຮູບປະທຳຢ່າງແທ້ຈິງ. ພ້ອມກັນນັ້ນ ກໍ່ເອົາໃຈໃສ່ປັບປຸງເງື່ອນໄຂ ແລະ ສິ່ງອຳນວຍຄວາມສະດວກໃນການປະຕິບັດໜ້າທີ່ວຽກງານຂອງພະນັກງານສຶກສາ ແລະ ຄູ-ອາຈານໃຫ້ດີຂຶ້ນ ເຮັດໃຫ້ເຂົາເຈົ້າມີຄວາມກະຕືລືລົ້ນຕໍ່ອາຊີບຄູ ແລະ ຕັ້ງໜ້າພັດທະນາອາຊີບຂອງຕົນໃຫ້ກ້າວສູ່ຄວາມເປັນມືອາຊີບທີ່ແທ້ຈິງ. ຄົ້ນຄວ້ານິຕິກຳຕ່າງໆກ່ຽວກັບການຍົກລະດັບຊີວິການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງຄູ ເພື່ອສະເໜີລັດຖະບານອະນຸມັດຕື່ມອີກ. ທັງໝົດນີ້ ແມ່ນແນໃສ່ເຮັດໃຫ້ຄູ ແລະ ລັດຖະກອນສຶກສາຫລຸດພົ້ນອອກຈາກຄວາມທຸກຍາກ, ຕັ້ງໜ້າປະຕິບັດໜ້າທີ່ວຽກງານ ຕາມຄວາມຮັບຜິດຊອບຂອງລັດຖະກອນສຶກສາແຕ່ລະຄົນ. ສຳລັບຄູ ກໍ່ຕັ້ງໜ້າສິດສອນນັກຮຽນດ້ວຍພາກພູມໃຈຕໍ່ອາຊີບຄູຂອງຕົນ ແລະ ໃນທີ່ສຸດກໍ່

ຈະປະກອບສ່ວນໃຫ້ອາຊີບຄູເປັນອາຊີບທີ່ນິຍົມຊົມຊອບຂອງຄົນໃນສັງຄົມ.

ຕໍ່ປະຊາຊົນທົ່ວໄປ ຊຶ່ງມີພັນທະນາສົ່ງລູກໄປໂຮງຮຽນ: ຄົນກຸ່ມນີ້ມີຄວາມທຸກຍາກທັງທາງດ້ານວັດຖຸ-ເງິນຄຳ ແລະ ຂາດໂອກາດທາງດ້ານການສຶກສາ. ສະນັ້ນ ວິທີບຸກທະລຸເພື່ອລົບລ້າງຄວາມທຸກຍາກທັງ 2 ປັດໄຈນີ້ແມ່ນພວກເຮົາຕ້ອງຂະຫຍາຍຕາໜ່າງການສຶກສາ ແລະ ນຳເອົາການສຶກສາຕິດພັນກັບການຝຶກອົບຮົມວິຊາຊີບໃຫ້ໄປເຖິງບ້ານ, ຄອບຄົວ ແລະ ຕົວບຸກຄົນໃນໝູ່ປະຊາຊົນໃຫ້ເຂົາເຈົ້າມີຄວາມຮູ້ໃນລະດັບໃດໜຶ່ງ. ການຂະຫຍາຍການສຶກສາຕ້ອງຕິດແໜ້ນກັບຄຳສັ່ງແນະນຳຂອງກົມການເມືອງ ສະບັບເລກທີ 03 ລົງວັນທີ 30 ພຶດສະພາ 2011 ວ່າດ້ວຍການສ້າງບ້ານໃຫ້ເປັນຫົວໜ່ວຍພັດທະນາ, ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍຢູ່ຊົນນະບົດ ແລະ ຕິດແໜ້ນກັບມະຕິຂອງກົມການເມືອງສູນກາງພັກວ່າດ້ວຍການສ້າງແຂວງ ເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານ ເປັນຫົວໜ່ວຍພັດທະນາ. ບ້ານພັດທະນາຕ້ອງບັນລຸ 4 ຄາດໝາຍ; ໃນນີ້ຄາດໝາຍທີ 3 ທີ່ກ່ຽວຂ້ອງກັບຂະແໜງສຶກສາ ໂດຍສະເພາະແມ່ນ ເດັກໃນເກນອາຍຸເຂົ້າຮຽນໄດ້ຮຽນໜັງສືບໍ່ໃຫ້ ຫຼຸດ 98%, ຜູ້ໃຫຍ່ທີ່ມີອາຍຸ 15 ປີຂຶ້ນໄປ ຢ່າງໜ້ອຍຕ້ອງມີລະດັບການສຶກສາຈົບຊັ້ນປະຖົມບຳລຸງ. ສຳລັບການສ້າງບ້ານໃຫຍ່ໃຫ້ເປັນຕົວເມືອງນ້ອຍໃນຊົນນະບົດຕິດພັນກັບຂະແໜງການສຶກສາ ແລະ ກິລາ ແມ່ນບ້ານນັ້ນ ຕ້ອງມີໂຮງຮຽນປະຖົມ, ມີໂຮງຮຽນມັດທະຍົມສົມບູນ, ມີຫ້ອງສະໝຸດ, ມີບ່ອນຫຼິ້ນກິລາປະເພດຕ່າງໆຕາມມາດຕະຖານ ແລະ ຄວາມເໝາະສົມຕົວຈິງຂອງ ແຕ່ລະທ້ອງຖິ່ນ.

### 3.2.2. ຕັ້ງໜ້າປະຕິບັດແຜນການ ແລະ ຄາດໝາຍຕົ້ນຕໍຂອງການສຶກສາ ແລະ ກິລາ.

(1). ເດັດດ່ຽວປະຕິຮູບລະບົບການສຶກສາແຫ່ງຊາດໃຫ້ແຂງແຮງ ໂດຍສະເພາະແຕ່ປີ 2010 ເຖິງ 2015 ນີ້ ແມ່ນເດັດດ່ຽວປະຕິບັດຕາມແຜນຍຸດທະສາດການປະຕິຮູບການສຶກສາແຫ່ງຊາດ ຊຶ່ງຈຸດໝາຍສູງສຸດຂອງມັນແມ່ນປັບ

ປຸງຄຸນນະພາບຂອງການສຶກສາ ກໍຄືການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນເທື່ອລະກ້າວ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ - ສັງຄົມຂອງປະເທດ. ການປະຕິຮູບລະບົບການສຶກສາແຫ່ງຊາດ ຕ້ອງປະຕິຮູບໄປຕາມ 6 ທິດນຳ, 7 ຍຸດທະສາດ, 7 ວິທີການ, 3 ລັກສະນະ ແລະ 5 ຫຼັກມູນຂອງການສຶກສາ ດັ່ງນີ້:

**ກ. ປະຕິຮູບການສຶກສາຕາມ 6 ທິດນຳ:**

- ທິດນຳທີ 1: ການປະຕິຮູບລະບົບການສຶກສາແຫ່ງຊາດ ເພື່ອພັດທະນາຊັບພະຍາກອນມະນຸດ
- ທິດນຳທີ 2: ການປະຕິຮູບລະບົບການສຶກສາແຫ່ງຊາດ ຕ້ອງລົງເລິກເຖິງໂຄງສ້າງຂອງການສຶກສາແຫ່ງຊາດ;
- ທິດນຳທີ 3: ການປະຕິຮູບລະບົບການສຶກສາແຫ່ງຊາດ ຕ້ອງດຳເນີນໄປບົນພື້ນຖານການມີສ່ວນຮ່ວມຂອງທົ່ວປວງຊົນ;
- ທິດນຳທີ 4: ການປະຕິຮູບລະບົບການສຶກສາແຫ່ງຊາດ ຕ້ອງເປັນການຂະຫຍາຍພູມປັນຍາ ແລະ ຄວາມເປັນເອກະລັກທາງດ້ານວັດທະນະທຳແຫ່ງຊາດ;
- ທິດນຳທີ 5: ການປະຕິຮູບລະບົບການສຶກສາແຫ່ງຊາດ ເປັນການຂະຫຍາຍໂອກາດດ້ານການສຶກສາ;
- ທິດນຳທີ 6: ການປະຕິຮູບລະບົບການສຶກສາແຫ່ງຊາດ ຕ້ອງເປັນການຍົກສະຖານະພາບ, ບົດບາດຂອງຄູ-ອາຈານສອນ ໃຫ້ສູງຂຶ້ນ.

**ຂ. ປະຕິຮູບການສຶກສາຕາມ 7 ຍຸດທະສາດ:**

- ຍຸດທະສາດທີ 1: ປະຕິຮູບການສຶກສາຕາມ 2 ດ້ານ ຄື: ດ້ານແນວຄິດອຸດົມການສັງຄົມນິຍົມ ແລະ ສ້າງຄົນເກັ່ງທາງ ດ້ານວິຊາສະເພາະ;
- ຍຸດທະສາດທີ 2: ພັດທະນາການຮຽນ - ການສອນຢ່າງຮອບດ້ານ ຕາມ 5 ຫຼັກມູນ ຂອງການສຶກສາ ຄື: ຄຸນສົມບັດສຶກສາ, ປັນຍາສຶກສາ, ພະລະ

ສຶກສາ, ສິລະປະສຶກສາ, ແລະ ແຮງງານສຶກສາ;

- ຍຸດທະສາດທີ 3: ເອົາໃຈໃສ່ປັບປຸງ ແລະ ຂະຫຍາຍການສຶກສາ ສໍາລັບເດັກກ່ອນໄວຮຽນ;
- ຍຸດທະສາດທີ 4: ຂະຫຍາຍການສຶກສາຂັ້ນພື້ນຖານຢ່າງກ້ວາງຂວາງ ທັງການສຶກສາໃນໂຮງຮຽນ ແລະ ການສຶກສານອກໂຮງຮຽນ ໂດຍສະເພາະເຂົ້າໃນຂົງເຂດຊົນນະບົດຫ່າງໄກສອກຫຼີກ;
- ຍຸດທະສາດທີ 5: ເຮັດໃຫ້ພົນລະເມືອງລາວໄດ້ຮັບການສຶກສາຂັ້ນພື້ນຖານຊັ້ນມັດທະຍົມຕອນຕົ້ນໂດຍພື້ນຖານ;
- ຍຸດທະສາດທີ 6: ພັດທະນາການສຶກສາໃນຕໍ່ໜ້າ ແມ່ນເອົາຄຸນນະພາບເປັນຕົ້ນຕໍ;
- ຍຸດທະສາດທີ 7: ສົ່ງເສີມໃຫ້ທົ່ວສັງຄົມ ໄດ້ປະກອບສ່ວນເຂົ້າຮ່ວມພັດທະນາການສຶກສາຢ່າງກວ້າງຂວາງ.

ຄ. ປະຕິຮູບການສຶກສາຕາມ 7 ວິທີການ:

- ວິທີທີ 1: ປ່ຽນແປງຈຸດໝາຍເນື້ອໃນຫຼັກສູດການສຶກສາຄືນໃໝ່ (ທຸກສາຍທຸກຊັ້ນທັງໃນໂຮງຮຽນ, ນອກໂຮງຮຽນ)
- ວິທີທີ 2: ພັດທະນາຄູອາຈານ ແລະ ປ່ຽນແປງວິທີສິດສອນຄືນໃໝ່;
- ວິທີທີ 3: ປັບປຸງ ແລະ ປ່ຽນແປງການຄຸ້ມຄອງການສຶກສາຄືນໃໝ່;
- ວິທີທີ 4: ສືບຕໍ່ພັດທະນາໂຄງປະກອບການສຶກສາແຫ່ງຊາດ ແລະ ພັດທະນາລະບົບໂຮງຮຽນ,ຫ້ອງຮຽນ ແລະ ພື້ນຖານການສຶກສາ;
- ວິທີທີ 5: ເພີ່ມງົບປະມານໃຫ້ຂະແໜງການສຶກສາ;
- ວິທີທີ 6: ສົ່ງເສີມການສຶກສາໃຫ້ເປັນຂອງທົ່ວປວງຊົນ;
- ວິທີທີ 7: ເພີ່ມທະວີການຮ່ວມມືກັບສາກົນ.

**ງ. ປະຕິຮູບການສຶກສາຕາມ 3 ລັກສະນະ.**

- ລັກສະນະທີ 1: ລັກສະນະຊາດ ໝາຍຄວາມວ່າ: ເນື້ອໃນຂອງການສຶກສາຂອງລາວ ຕ້ອງສ່ອງແສງໃຫ້ເຫັນເຖິງແນວທາງນະໂຍບາຍຂອງພັກ;

ສ່ອງແສງໃຫ້ເຫັນເຖິງເອກະລັກ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າພາຍໃນຊາດ;

- ລັກສະນະທີ 2: ລັກສະນະວິທະຍາສາດ-ທັນສະໄໝ ໝາຍຄວາມວ່າ ເນື້ອໃນຂອງການສຶກສາລາວ ຕ້ອງມີລັກສະນະວິທະຍາສາດ, ປະຕິເສດສິ່ງທີ່ຂັດກັບວິທະຍາສາດ ແລະ ມີຄວາມທັນ ສະໄໝຕາມ ກະແສໂລກາພິວັດ;
- ລັກສະນະທີ 3: ລັກສະນະມະຫາຊົນ ໝາຍຄວາມວ່າການສຶກສາລາວຕ້ອງເປັນຂອງໝົດທຸກຄົນ, ພົນລະເມືອງລາວທຸກຄົນມີພັນທະຕໍ່ການສຶກສາ ແລະ ສ້າງໂອກາດໃຫ້ທຸກຄົນໄດ້ຮັບການສຶກສາຢ່າງສະເໝີພາບກັນ.

ຈ. ປະຕິຮູບການສຶກສາຕາມ 5 ຫລັກມູນ.

- ຫຼັກມູນທີ 1: ຄຸນສົມບັດສຶກສາ ແມ່ນການສ້າງຄົນໃຫ້ມີການປະພຶດດີ ແລະ ສອດຄ່ອງກັບວັດທະນະທຳ ແລະ ຮີດຄອງປະເພນີຂອງລາວ;
- ຫຼັກມູນທີ 2: ປັນຍາສຶກສາ ແມ່ນການສ້າງຄົນໃຫ້ມີຄວາມຮູ້, ຄວາມສະຫລາດ, ມີແນວຄິດສ້າງສັນ, ມີຫົວຄິດປະດິດສ້າງ ແລະ ມີການແກ້ໄຂບັນຫາຢ່າງມີໂລຊິກ;
- ຫຼັກມູນທີ 3: ພະລະສຶກສາ ແມ່ນການສ້າງຄົນທີ່ມີສຸຂະພາບເຂັ້ມແຂງ, ມີພະລະອະນາໄມສົມບູນ;
- ຫຼັກມູນທີ 4: ສິລະປະສຶກສາ ແມ່ນການສ້າງຄົນໃຫ້ມີວາດດຳລົງຊີວິດທີ່ສະແດງເຖິງຄວາມເປັນເອກະລັກຂອງຊາດລາວ;
- ຫຼັກມູນທີ 5: ແຮງງານສຶກສາ ແມ່ນການສ້າງຄົນໃຫ້ຮູ້ຄຸນຄ່າຂອງແຮງງານ, ຮູ້ອອກແຮງງານຢ່າງມີວິໄນ ແລະມີປະສິດທິພາບ.

(2). ສູ້ຊົນສືບຕໍ່ຈັດຕັ້ງປະຕິບັດເປົ້າໝາຍສະຫັດສະວັດຂອງກາພັດທະນາທີ່ຕິດພັນກັບຂະແໜງການສຶກສາ ແລະ ກິລາ ຄືນເປົ້າໝາຍທີ 2 ແລະ ເປົ້າ

ໝາຍທີ 3 ໃຫ້ສຳເລັດໃນປີ 2015 ແຕ່ລະເປົ້າໝາຍມີເນື້ອໃນດັ່ງນີ້:

ກ. ເປົ້າໝາຍທີ 2: ໃຫ້ທຸກຄົນໄດ້ຮັບການສຶກສາຂັ້ນປະຖົມຢ່າງທົ່ວເຖິງ. ເປົ້າໝາຍນີ້ມີ 1 ຄາດໝາຍຄື: ຮັບປະກັນຮອດປີ 2015 ໃຫ້ເດັກທຸກຄົນ ທັງຍິງ ແລະ ຊາຍຮຽນຈົບຊັ້ນປະຖົມສຶກສາ, ການວັດແທກມີ 3 ຕົວຊີ້ບອກຕົ້ນຕໍຄື :

- ອັດຕາເຂົ້າຮຽນສຸດທິຂອງຊັ້ນປະຖົມ ຕ້ອງບັນລຸ 98%,
- ອັດຕາການລອດເຫຼືອຂອງເດັກທີ່ເຂົ້າຮຽນ ປ.1 ຮຽນຮອດ ປ.5 ຕ້ອງບັນລຸ 95%
- ອັດຕາການຮູ້ໜັງສືຂອງກຸ່ມຄົນ 15 ປີ ຂຶ້ນເມືອ ຕ້ອງບັນລຸ 99%

ຂ. ເປົ້າໝາຍທີ 3: ສົ່ງເສີມບົດບາດຍິງ - ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ. ເປົ້າໝາຍ ນີ້ມີ 1 ຄາດໝາຍ ຄື: ລົບລ້າງຄວາມບໍ່ສະເໝີພາບລະຫວ່າງຍິງ - ຊາຍ ໃນການສຶກສາຊັ້ນປະຖົມ - ມັດທະຍົມ ໃນ ປີ 2005 ແລະ ທຸກຊັ້ນໃນປີ 2015. ການວັດແທກ ມີ 4 ຕົວຊີ້ບອກໃນ ນັ້ນກ່ຽວຂ້ອງກັບຂະແໜງການສຶກສາ ແລະ ກິລາໂດຍກົງມີ 2 ຕົວຊີ້ບອກ ຄື:

- ອັດຕາສ່ວນເຂົ້າຮຽນ ຂອງຜູ້ຍິງຕໍ່ຜູ້ຊາຍໃນຊັ້ນປະຖົມ, ຊັ້ນມັດທະຍົມ, ການສຶກສາຊັ້ນສູງຕ້ອງສະເໝີພາບກັນ.
- ອັດຕາສ່ວນການຮູ້ໜັງສື ຂອງເພດຍິງ ຕໍ່ເພດຊາຍ ໃນກຸ່ມອາຍຸແຕ່ 15 ປີຂຶ້ນໄປຕ້ອງສະເໝີພາບກັນ.

ເພື່ອຢາກບັນລຸ 2 ເປົ້າໝາຍດັ່ງກ່າວ; ພວກເຮົາຕ້ອງບັນລຸບັນດາຄາດໝາຍທີ່ກຳນົດໄວ້ໃນແຜນປະຕິບັດງານແຫ່ງຊາດການສຶກສາເພື່ອທຸກຄົນຮອດປີ 2015 ດັ່ງນີ້:

- ການສຶກສາເດັກກ່ອນໄວຮຽນ: ເດັກໃນເກນອາຍຸ 3 - 4 ປີຕ້ອງໄດ້ເຂົ້າຮຽນ 27%. ສົກຮຽນ
- 2011 - 2012 ໄດ້ແລ້ວ 19.3% ; ເກນອາຍຸ 5 ປີ ໄດ້ເຂົ້າຮຽນກຽມປະຖົມ 55% ໄດ້ແລ້ວ 46.6% ແລະເກນອາຍຸ 3-5 ປີ ໄດ້ເຂົ້າຮຽນ 39% ໄດ້ແລ້ວ 28.5%.

- ຊັ້ນປະຖົມສຶກສາ: ເຮັດໃຫ້ອັດຕາເຂົ້າຮຽນໃໝ່ສຸດທິຊັ້ນ ປ.1 ໃຫ້ໄດ້ 100%. ໃນສົກຮຽນ 2011-2012 ນີ້ໄດ້ແລ້ວ 89.9%; ອັດຕາເຂົ້າຮຽນສຸດທິຊັ້ນປະຖົມໃຫ້ໄດ້ 98%, ໄດ້ແລ້ວ 95.2%; ອັດຕາລອດເຫຼືອ ປ.1-ປ.5 ຕ້ອງບັນລຸ 95%, ໄດ້ແລ້ວ 70%.
- ຊັ້ນມັດທະຍົມສຶກສາຕອນຕົ້ນ: ອັດຕາເຂົ້າຮຽນລວມຂອງຊັ້ນຮຽນດັ່ງກ່າວໃຫ້ໄດ້ 75%. ໃນສົກຮຽນ 2011-2012 ນີ້ໄດ້ແລ້ວ 64%.
- ການສຶກສານອກໂຮງຮຽນ: ຕ້ອງປະກາດຈົບຊັ້ນປະຖົມບຳລຸງໃຫ້ປະຊາຊົນທົ່ວປະເທດ ໃຫ້ສຳເລັດ 145 ເມືອງ. ມາຮອດສົກຮຽນ 2011-2012 ນີ້ສຳເລັດແລ້ວ 110 ເມືອງ ແລະ ຍັງຈະຕ້ອງສູ້ຊົນຕື່ມ 35 ເມືອງ. ອັດຕາການຮູ້ໜັງສືໃນເກນ ອາຍຸ 15 ປີຂຶ້ນໄປ ໃຫ້ໄດ້ 99% ແລະ ມາຮອດປະຈຸບັນສຳເລັດແລ້ວປະມານ 80%.

(3). ແກ້ໄຂສະພາບການສຶກສາທີ່ບໍ່ທັນຕອບສະໜອງ ໄດ້ທາງດ້ານປະລິມານ ແລະ ຄຸນນະພາບໂດຍຈັດສັນສາຍການສຶກສາ, ໂຄງປະກອບການສ້າງຄືນ ໃຫ້ເປັນລະບົບຊັດເຈນ ໝາຍຄວາມວ່າ ຕ້ອງດັດສົມໂຄງປະກອບຂອງລະບົບໂຮງຮຽນ ແລະ ສະຖາບັນການສຶກສາ, ດັດສົມຫຼັກສູດ, ວິຊາຮຽນແຕ່ລະດັບ, ດັດສົມການຄັດເລືອກ, ການສອບເສັງເອົານັກຮຽນເຂົ້າຮຽນວິຊາຊີບຊັ້ນຕົ້ນ, ຊັ້ນກາງ, ຊັ້ນສູງ, ປະລິຍາຕີ ໃຫ້ໄປຕາມແບບຮູບທາດ, ໄປຕາມຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ຄ່ອຍໆຫຍັບມໍ່ເຂົ້າກັບມາດຕະຖານຂອງຂົງເຂດ ແລະ ສາກົນ.

(4). ປັບປຸງອັດຕາສ່ວນຄູສອນຕໍ່ນັກຮຽນ - ນັກສຶກສາ, ປັບປຸງລະບົບໂຄງປະກອບຄູ -ອາຈານສອນໃນແຕ່ລະຊັ້ນ, ແຕ່ລະສາຍ ນັບທັງພາກລັດ ແລະ ພາກເອກະຊົນ ໃຫ້ສອດຄ່ອງ, ເໝາະສົມກັບລະດັບຂອງສະຖາບັນການສຶກສາ ໝາຍຄວາມວ່າ ຄູ - ອາຈານສອນ ຢູ່ສະຖາບັນການສຶກສາແຫ່ງໃດໜຶ່ງຕ້ອງມີລະດັບວຸທິການສຶກສາເໜືອກ່ວາ ຫຼື ສູງກ່ວາລະດັບຂອງສະ

ຖາບັນການສຶກສາແຫ່ງນັ້ນ. ສໍາລັບຄູ - ອາຈານສອນຢູ່ມະຫາວິທະຍາໄລຮອດປີ 2015 ຕ້ອງຮັບປະກັນອັດຕາສ່ວນຄູ-ອາຈານສອນ 10 ຄົນໃດໃຫ້ມີປະລິຍາເອກ 1 ຄົນ, ປະລິຍາໂທ 6 ຄົນ ແລະ ປະລິຍາຕີ 3 ຄົນ(1:6:3).

(5). ປັບປຸງ, ປັບປຸງແປງວິທີການສອນຂອງຄູ-ອາຈານ, ວິທີສິດສອນຂອງຄູອາດມີຫຼາຍວິທີທີ່ຫຼາກຫຼາຍ ວິທີທີ່ສໍາຄັນແມ່ນ ເຮັດໃຫ້ຜູ້ຮຽນສາມາດນໍາເອົາຄວາມຮູ້ທີ່ມີໃນຫຼັກສູດນັ້ນນໍາໄປໃຊ້ເຂົ້າໃນພາກປະຕິບັດຕົວຈິງໄດ້. ປັບປຸງວິທີການຄົ້ນຄ້ວາຮໍ່າຮຽນຂອງ ນັກຮຽນ ສ້າງຄ່ານິຍົມໃນການສ້າງຄົນໃຫ້ຮຽນດີ - ຮຽນເກັ່ງ, ມີຄວາມດຸໝັ່ນ ພາກພຽນ, ມີຄວາມມານະອົດທົນ, ເຫັນຄຸນຄ່າຂອງການຮຽນ. ໃນຕໍ່ໜ້ານີ້ ຈະສົ່ງເສີມໃຫ້ຄົນເຂົ້າຮຽນຕາມລະດັບຄວາມສາມາດຂອງຜູ້ຮຽນ, ຈະບໍ່ອະນຸຍາດໃຫ້ຄົນຜູ້ທີ່ບໍ່ມີລະດັບ, ຜູ້ທີ່ຮຽນອ່ອນ, ຄຸນສົມບັດບໍ່ດີ ເຂົ້າຮຽນໃນລະດັບທີ່ເໜືອກ່ວາຄວາມສາມາດຂອງຜູ້ຮຽນ. ໝາຍຄວາມວ່າ ປະສົມປະສານລະຫວ່າງການຄັດເລືອກ ແລະ ການສອບເສັງເຂົ້າຮຽນສາຍອາຊີວະສຶກສາ ແລະ ມະຫາວິທະຍາໄລ. ສົ່ງເສີມຜູ້ຮຽນດີຮຽນເກັ່ງ, ມີຄຸນສົມບັດດີໄດ້ຮຽນໃນລະດັບສູງຂຶ້ນຕາມຄວາມມັກຂອງຜູ້ຮຽນ, ຄັດເລືອກ, ເລືອກເຟັ້ນເອົານັກຮຽນຢູ່ເຂດຊົນເຜົ່າ, ເຂດຫ່າງໄກສອກຫຼີກມາຮຽນວິຊາຊີບ, ຂະແໜງວິຊາທີ່ທ້ອງຖິ່ນນັ້ນຕ້ອງການຮຽນຈົບແລ້ວສົ່ງກັບຄືນເມືອສ້າງສາ ແລະ ພັດທະນາຢູ່ ທ້ອງຖິ່ນຂອງເຂົາເຈົ້າ.

(6). ຄົ້ນຄວ້າແບ່ງຄວາມຮັບຜິດຊອບ ໃນການຄຸ້ມຄອງການສຶກສາ ໃຫ້ໄປຕາມທິດການແບ່ງຂັ້ນຄຸ້ມຄອງ ໂດຍສະເພາະແມ່ນຄວາມຮັບຜິດຊອບລະຫວ່າງກະຊວງສຶກສາທິການ ແລະ ກິລາ ກັບບັນດາກະຊວງ, ອົງການທຽບເທົ່າໃຫ້ຈະແຈ້ງ. ການເປີດສອນຫຼັກສູດລະດັບປະລິນຍາຕີ ໃຫ້ເປັນໜ້າທີ່ຂອງບັນດາມະຫາວິທະຍາໄລທີ່ມີໃນປະຈຸບັນ. ສ່ວນບັນດາກະຊວງ ແລະ ອົງການອື່ນໆ ຊຶ່ງຮັບຜິດຊອບກໍ່ສ້າງ ແລະ ບໍາລຸງນັກວິຊາການ, ຜູ້

ຄຸ້ມຄອງບໍລິຫານ ໃຫ້ສອດຄ່ອງກັບໜ້າທີ່ວຽກງານຕົວຈິງໃນແຕ່ລະຂົງເຂດວຽກງານນັ້ນ ໃຫ້ສ້າງຮອດແຕ່ລະດັບຊັ້ນສູງ ແລະ ລົງເລິກການຝຶກອົບຮົມວິຊາສະເພາະໃຫ້ພະນັກງານຂະແໜງການຂອງຕົນ ( ບໍ່ນັບສະຖາບັນການເມືອງການປົກຄອງແຫ່ງຊາດ, ວິທະຍາຄານປ້ອງກັນຊາດ -ປ້ອງກັນຄວາມສະຫງົບ ).

(7). ປັບປຸງການແບ່ງຂັ້ນຄຸ້ມຄອງພາຍໃນຂະແໜງການສຶກສາ ແລະ ກິລາ ໃຫ້ຈະແຈ້ງ ຕາມທິດ 3 ສ້າງ ຄື: ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ.

ກ. ກະຊວງສຶກສາທິການ ແລະ ກິລາ ມີໜ້າທີ່ ແລະ ຄວາມຮັບຜິດຊອບໂດຍກົງໃນການສ້າງ ແລະ ປັບປຸງນິຕິກຳ, ລະບຽບຫຼັກການໃນການຄຸ້ມຄອງວຽກງານຮອບດ້ານຂອງການສຶກສາ ແລະ ກິລາຂັ້ນມະຫາພາກ ນັບທັງການປະກັນຄຸນນະພາບການສຶກສາທຸກລະດັບ, ທັງພາກລັດ ແລະ ພາກເອກະຊົນ. ຫັນເອົາແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ - ສັງຄົມຂອງ ລັດຖະບານມາເປັນອັນລະອຽດໃນຂະແໜງການຂອງຕົນ ໂດຍກຳນົດເປັນແຜນຍຸດທະສາດ, ແຜນນະໂຍບາຍ, ແຜນງານ, ໂຄງການລະດັບຊາດໃນການພັດທະນາການສຶກສາ ແລະ ກິລາຂອງຊາດເປັນແຕ່ລະໄລຍະ. ຮັບຜິດຊອບການພັດທະນາຫຼັກສູດການຮຽນ - ການສອນ, ການກໍ່ສ້າງ ແລະ ບຳລຸງຍົກລະດັບພະນັກງານ, ຄູ-ອາຈານ, ການສະໜອງປຶ້ມແບບຮຽນ, ປຶ້ມຄູ່ມືຄູ, ປຶ້ມບັນທຶກການຮຽນ - ການສອນ, ປຶ້ມແຕ່ງບົດສອນເຄື່ອງທົດລອງອຸປະກອນຮັບໃຊ້ການຮຽນ - ການສອນ ຕາມລາຍ ການມາດຕະຖານຕໍ່າສຸດທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດອອກ. ຮັບຜິດຊອບການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງຂະແໜງການສຶກສາ ແລະ ກິລາຂັ້ນມະຫາພາກ, ຮັບຜິດຊອບການຂຶ້ນແຜນຄວາມຕ້ອງການງົບປະມານ - ການເງິນ, ການລົງທຶນ, ການປະມູນ, ການຈັດຊື້, ຈັດຈ້າງ ລະດັບກະຊວງ.

ຄຸ້ມຄອງການກໍ່ສ້າງອອກແບບກໍ່ສ້າງພື້ນຖານໂຄງລ່າງການສຶກສາ, ຈັດສົ່ງອຸປະກອນການຮຽນ - ການສອນຈາກສູນກາງລົງຮອດແຂວງ / ເມືອງ. ຄຸ້ມຄອງມະຫາພາກ ມະຫາວິທະຍາໄລແຫ່ງຊາດ, ມະຫາວິທະຍາໄລສຸພານຸວົງ, ມະຫາວິທະຍາໄລຈຳປາສັກ, ມະຫາວິທະຍາໄລສະຫວັນນະເຂດ, ສະຖາບັນພັດທະນາຜູ້ບໍລິຫານການສຶກສາ, ວິທະຍາໄລຄູ, ວິທະຍາໄລ, ໂຮງຮຽນຊົນເຜົ່າທີ່ຮັບໃຊ້ຫຼາຍແຂວງ, ສູນອາຊີວະສຶກສາທັງພາກລັດ ແລະ ເອກະຊົນ, ວິທະຍາໄລສົງອົງຕື້, ຫ້ອງການສຶກສາສົງສູນກາງ, ສູນພັດທະນາການສຶກສານອກໂຮງຮຽນ ລວມທັງສູນພັດທະນາການສຶກສານອກໂຮງຮຽນປະຈຳພາກ. ກວດກາ, ກວດການ, ຕິດຕາມ, ປະເມີນຜົນການປະຕິບັດແຜນພັດທະນາການສຶກສາ ແລະ ກິລາຂອງຊາດເປັນແຕ່ລະໄລຍະ. ນອກຈາກນັ້ນ ກະຊວງສຶກສາທິການ ແລະ ກິລາ ຍັງມີໜ້າທີ່ປະສານສົມທົບກັບອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ.

ຂ. ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ ເປັນຂອດປະສານລະຫ່ວາງ ກະຊວງ ກັບອົງການປົກຄອງທ້ອງຖິ່ນ, ລະຫວ່າງກະຊວງ ກັບຫ້ອງການສຶກສາທິການ ແລະ ກິລາ ເມືອງ. ພະແນກສຶກສາທິການ ແລະ ກິລາແຂວງ ມີໜ້າທີ່ສົມທົບກັບຄະນະພັກ, ອຳນາດການປົກຄອງແຂວງ, ຄະນະພັດທະນາການສຶກສາຂັ້ນແຂວງ ວາງແຜນພັດທະນາການສຶກສາ ແລະ ກິລາຮອບດ້ານທົ່ວ ແຂວງຂອງຕົນນັບທັງແຜນງົບປະມານການເງິນ, ການລົງທຶນ. ຮັບຜິດຊອບໂດຍກົງການປະມູນ, ການຈັດຊື້, ຈັດຈ້າງ ລະດັບແຂວງ, ຮັບຜິດຊອບການຄຸ້ມຄອງ ແລະ ນຳໃຊ້ຊັບສິນ ໃນຂັ້ນຄຸ້ມຄອງຂອງຕົນ, ການຈັດສົ່ງອຸປະກອນການສອນ - ການຮຽນຈາກແຂວງ ລົງຮອດ ເມືອງ/ໂຮງຮຽນ. ສັງລວມແຜນຄວາມຕ້ອງ ການສ້າງພະນັກງານຂະແໜງວິຊາຕ່າງໆ ຈາກແຕ່ລະເມືອງພາຍໃນແຂວງຂອງຕົນ, ຮັບຜິດຊອບໃນການຊີ້ນຳ -ນຳພາຫ້ອງການສຶກສາທິການ ແລະ ກິລາ ເມືອງ, ຄຸ້ມຄອງລັດຖະກອນຂະແໜງການສຶກສາ ແລະ ກິລາ, ຄູ - ອາຈານສອນທົ່ວ

ແຂວງຂອງຕົນ, ຄຸ້ມຄອງບັນດາໂຮງຮຽນມັດທະຍົມຕອນປາຍ, ມັດທະຍົມສົມບູນ, ໂຮງຮຽນ ວິຊາຊີບຊັ້ນຕົ້ນ, ຊັ້ນກາງ ທັງພາກລັດ ແລະ ເອກະຊົນ, ໂຮງຮຽນ, ວິທະຍາໄລສົງ, ໂຮງຮຽນຊົນເຜົ່າ, ສູນການສຶກສາຊຸມຊົນຂອງແຂວງ. ກວດກາ, ກວດການ, ຕິດຕາມ, ປະເມີນຜົນການປະຕິບັດແຜນພັດທະນາການສຶກສາ ແລະ ກິລາພາຍໃນແຂວງຂອງຕົນ ເປັນແຕ່ລະໄລຍະແລ້ວລາຍງານໃຫ້ກະຊວງສຶກສາທິການ ແລະ ກິລາ.

ຄ. ຫ້ອງການສຶກສາທິການ ແລະ ກິລາ ເມືອງເປັນຂອດປະສານງານ ລະຫວ່າງພະແນກສຶກສາທິການ ແລະ ກິລາ ແຂວງກັບອຳນາດການ ປົກຄອງເມືອງ, ບ້ານ ແລະ ກຸ່ມບ້ານ. ຫ້ອງການສຶກສາທິການ ແລະ ກິລາເມືອງ ມີໜ້າທີ່ປະສານສົມທົບກັບພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນ, ຄະນະພັກ, ອຳນາດການປົກຄອງເມືອງ, ຄະນະພັດທະນາການສຶກສາຂັ້ນເມືອງ, ອຳນາດການປົກຄອງບ້ານ, ກຸ່ມບ້ານ, ຄະນະພັດທະນາການສຶກສາຂັ້ນບ້ານເພື່ອວາງແຜນພັດທະນາການສຶກສາ ແລະກິລາຮອບດ້ານທົ່ວເມືອງ, ບ້ານ, ກຸ່ມບ້ານນັບທັງແຜນງົບປະມານການເງິນ, ການລົງທຶນ, ແຜນກໍ່ສ້າງພະນັກງານຂະແໜງວິຊາຕ່າງໆ ພາຍໃນເມືອງຂອງຕົນ ພ້ອມທັງຄັດເລືອກເອົານັກຮຽນເຂດທີ່ຂາດພະນັກງານວິຊາການແຕ່ລະຂະແໜງວິຊາມາຮຽນຂະແໜງ ວິຊາທີ່ຕ້ອງການຢູ່ຕາມສະຖາບັນອາຊີວະສຶກສາຕາມແຜນແບ່ງປັນຂອງກະຊວງ. ຮັບຜິດຊອບການປະມູນ, ການຈັດຊື້, ຈັດຈ້າງຂັ້ນເມືອງ, ການຈັດສົ່ງອຸປະກອນການສອນ-ການຮຽນ ຈາກເມືອງລົງຮອດໂຮງຮຽນ/ໂຮງຮຽນມາ. ຄຸ້ມຄອງ ແລະນຳໃຊ້ຊັບສິນຢູ່ໃນຂັ້ນຄຸ້ມຄອງຂອງຕົນຮຽນ. ຄຸ້ມຄອງໂດຍກົງລັດຖະກອນຂະແໜງການສຶກສາ ແລະກິລາ, ຄູອາຈານສອນທົ່ວເມືອງ ຂອງຕົນ. ຄຸ້ມຄອງບັນດາໂຮງຮຽນລ້ຽງເດັກ, ອະນຸບານ, ໂຮງຮຽນປະຖົມສຶກສາ, ໂຮງຮຽນມັດທະຍົມຕອນຕົ້ນ ທັງພາກລັດ ແລະ ເອກະຊົນໂຮງຮຽນຊົນເຜົ່າ, ສູນການສຶກສາຊຸມຊົນປະຈຳຢູ່ເມືອງ, ຢູ່ບ້ານ ແລະ ກຸ່ມບ້ານ. ກວດກາ, ກວດການ, ຕິດຕາມປະເມີນຜົນການປະຕິບັດແຜນພັດທະນາການສຶກສາ

ແລະ ກິລາພາຍໃນເມືອງຂອງຕົນເປັນແຕ່ລະໄລຍະ ແລ້ວລາຍງານໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ ທີ່ຕົນຂຶ້ນກັບ.

ງ. ໂຮງຮຽນລະດັບສາມັນສຶກສາ ມີໜ້າທີ່ປະສານສົມທົບກັບຫ້ອງການສຶກສາທິການ ແລະ ກິລາ ເມືອງ, ຄະນະພັກ, ອຳນາດການປົກຄອງບ້ານ, ກຸ່ມບ້ານ, ຄະນະພັດທະນາການສຶກສາຂັ້ນບ້ານ. ພ້ອມກັນພັດທະນາໂຮງຮຽນ, ຄຸ້ມຄອງນຳໃຊ້ງົບປະມານຂອງໂຮງຮຽນ ແລະ ລາຍຮັບວິຊາການອື່ນໆຂອງໂຮງຮຽນໃຫ້ຖືກຕ້ອງຕາມລະບຽບຫຼັກການຂອງການເງິນ. ກວດກາ, ກວດການ, ປະເມີນຜົນການປະຕິບັດແຜນພັດທະນາໂຮງຮຽນຂອງຕົນເປັນແຕ່ລະໄລຍະ ແລ້ວລາຍງານໃຫ້ຫ້ອງການສຶກສາທິການ ແລະ ກິລາ ເມືອງທີ່ຕົນຂຶ້ນກັບ.

ຈ. ບັນດາມະຫາວິທະຍາໄລ,ວິທະຍາໄລ,ໂຮງຮຽນ,ສະຖາບັນການສຶກສາທັງພາກລັດ ແລະ ເອກະຊົນນອກຈາກປະຕິບັດໜ້າທີ່ປົກກະຕິຂອງຕົນ ໃນການເປີດສອນສາຂາວິຊາຕ່າງໆແລ້ວ, ຍັງມີໜ້າທີ່ຮັບນັກຮຽນ-ນັກສຶກສາເຂົ້າຮຽນໃນສະຖາບັນຂອງຕົນ. ສຳລັບສະຖາບັນການສຶກສາຂອງລັດໃຫ້ຮັບຕາມແຜນຂອງກະຊວງສຶກສາທິການ ແລະ ກິລາ ວາງອອກ. ສ່ວນສະຖາບັນການສຶກສາພາກເອກະຊົນ ຕ້ອງຮັບຕາມມາດຕະຖານ ໂດຍຜ່ານການຮັບຮອງຈາກກະຊວງສຶກສາທິການ ແລະ ກິລາ.

(8). ເອົາໃຈໃສ່ການພັດທະນາວຽກງານກິລາ - ກາຍະກຳ ໃຫ້ໄປຕາມແຜນຍຸດທະສາດການພັດທະນາກິລາ -ກາຍະກຳ ແຕ່ນີ້ຮອດປີ 2020. ຖືເອົາການພັດທະນາວຽກງານກິລາ - ກາຍະກຳເປັນ ອົງປະກອບໜຶ່ງຂອງການສ້າງຊັບພະຍາກອນມະນຸດ ( ສ້າງຄົນ); ປັບປຸງ ແລະ ຍົກລະດັບສູນຝຶກກິລາສີເກີດຂຶ້ນເປັນວິທະຍາໄລ ເພື່ອສ້າງນັກກິລາອາຊີບ ສຳລັບຜູ້ມີພອນສະຫວັນໃນດ້ານດັ່ງກ່າວ. ຂະຫຍາຍວຽກງານກິລາ - ກາຍຍະກຳໄປສູ່ຊຸມຊົນ, ທ້ອງຖິ່ນຮາກຖານ, ໂຮງຮຽນ, ໂຮງຈັກ, ໂຮງງານຢ່າງແຂງແຮງ ເພື່ອກໍ່ສ້າງພົນລະເມືອງລາວໃຫ້ຮູ້ຝຶກຝົນຫຼໍ່ຫຼອມສຸຂະພາບ, ຮ່າງກາຍໃຫ້ແຂງ

ແຮງ ແລະ ສ້າງທັດສະນະຄະຕິຂອງຕົນເອງ ໃຫ້ໄປຕາມອຸດົມຄະຕິຂອງ ຄວາມເປັນນັກກິລາຄື: ຮູ້ເສຍ, ຮູ້ຊະນະ ແລະ ຮູ້ໃຫ້ອະໄພຊຶ່ງກັນ ແລະ ກັນ.

(9). ສືບຕໍ່ຈັດຕັ້ງປະຕິບັດຂະບວນການແຂ່ງຂັນຮັກຊາດ-ພັດທະນາ ແລະ ໂດຍຖືເອົາການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະ ກິລາ ໃຫ້ເປັນຮູບປະທຳຢ່າງແທ້ຈິງ ຄື: (1) ແຂ່ງຂັນສອນດີ-ຮຽນເກັ່ງ, (2) ຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ໃນຂົງເຂດການສຶກສາ ແລະ ກິລາ, (3) ສ້າງໂຮງຮຽນ/ສະຖາບັນໃຫ້ມີສິ່ງແວດລ້ອມທີ່ດີຕາມ 5 ຫຼັກມູນຂອງການສຶກສາ.

(10). ສົ່ງເສີມໃຫ້ພາກເອກະຊົນລົງທຶນ ໃສ່ການພັດທະນາການສຶກສາ ໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ນັບທັງມະຫາວິທະຍາໄລ ຕາມຂອບ ແລະ ເງື່ອນໄຂຂອງວຸດທິການສຶກສາ ແລະ ມາດຕະຖານການປະກັນຄຸນນະພາບການສຶກສາແຫ່ງຊາດທີ່ກະຊວງສຶກສາທິການ ແລະ ກິລາກຳນົດອອກໃນແຕ່ລະໄລຍະ. ອັນສຳຄັນ ແມ່ນຄຽງຄູ່ກັບການສົ່ງເສີມ ນັ້ນຕ້ອງຮັບປະກັນ ໃຫ້ມີຄຸນນະພາບແທ້.

ທິດທາງ, ຫລັກການ ແລະ ວິທີການແກ້ໄຂບັນຫາຕ່າງໆ ໃນຂົງເຂດວຽກງານສຶກສາ ແລະ ກິລາ ດັ່ງກ່າວມານັ້ນ ບໍ່ແມ່ນຜູ້ໃດຜູ້ໜຶ່ງຈະແກ້ໄດ້; ແຕ່ມັນຕ້ອງອາໄສຄວາມຮູ້, ຄວາມສາມາດ, ມັນສະໝອງ, ຄວາມມານະອົດທົນ, ຄວາມຈິງໃຈ, ປະສົບປະການ, ຄວາມເປັນເອກະພາບ ແລະ ຄວາມຮ່ວມແຮງຮ່ວມໃຈກັນຂອງຜູ້ບໍລິຫານການສຶກສາ ແລະ ກິລາທຸກຂັ້ນ, ພະນັກງານສຶກສາ ແລະ ກິລາ, ຄູ -ອາຈານທຸກຄົນຕະຫລອດຮອດການຮ່ວມມືຂອງທຸກພາກສ່ວນໃນສັງຄົມ ຈຶ່ງຈະແກ້ໄຂບັນຫາເຫລົ່ານີ້ໃຫ້ສຳເລັດລຸລ່ວງໄປດ້ວຍດີ.

**ເອກກະສານອ້າງອີງ:**


1. ເອກກະສານກອງປະຊຸມໃຫຍ່ຄັ້ງທີ 9 ຂອງພັກປະຊາຊົນປະຕິວັດລາວ ປີ 2011;
2. ກົດໝາຍວ່າດ້ວຍການສຶກສາແຫ່ງສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ(ສະບັບປັບປຸງ) ເລກທີ 04/ສພຊ ລົງວັນທີ 03 ກໍລະກົດ (7)2007;
3. ແຜນຍຸດທະສາດການສຶກສາ 20 ປີ (2001-2020);
4. ແຜນປະຕິບັດງານແຫ່ງຊາດການສຶກສາເພື່ອທຸກຄົນຮອດປີ 2015;
5. ແຜນຍຸດທະສາດການປະຕິຮູບການສຶກສາແຫ່ງຊາດ ປີ 2006-2015;
6. ບົດສະຫລຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາສົກປີ 2011-2012;
7. ຄຳເຫັນໂອ້ລົມ ແລະ ຊີ້ນຳຂອງທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວ ຕໍ່ກອງປະຊຸມຜູ້ບໍລິ ຫານການສຶກສາທົ່ວປະເທດປະຈຳປີ 2012 ທີ່ແຂວງສາລະວັນລະຫວ່າງວັນທີ 9 - 11 ກໍລະກົດ (7) 2012;
8. ບົດລາຍງານສະພາບການສຶກສາຂອງ ລັດຖະມົນຕີວ່າການກະຊວງ ສຶກສາທິການ ແລະ ກິລາຕໍ່ກອງປະຊຸມສະໄໝສາມັນຂອງ ສະພາແຫ່ງຊາດ.
9. ຄຳສັ່ງແນະນຳຂອງລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ກ່ຽວກັບການຈັດຕັ້ງປະຕິບັດການແບ່ງຂັ້ນຄຸ້ມຄອງ,ການແບ່ງໜ້າທີ່ແລະຄວາມຮັບຜິດຊອບຂອງຂະແໜງການສຶກສາ ແລະ ກິລາ ສະບັບເລກທີ 1182/ສສກ; ລົງວັນທີ 22 ສິງຫາ (8) 2012;
10. ຄຳສັ່ງແນະນຳຂອງລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການຜັນຂະຫຍາຍ ການທົດລອງສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາໃນເຂດຈຸດສຸມ ຂອງຂະແໜງການສຶກສາ ແລະ ກິລາ ສະບັບເລກທີ 1183/ສສກ; ລົງວັນທີ 22 ສິງຫາ (8) 2012;